ມະຫາວິທະຍາໄລແຫ່ງຊາດ
ຫໍສະໝຸດກາງ

# ດອກສຸດທ້າຍທລ້ຳມ

ດອກເກດ

ມະຫາວິທະຍາໄລແຫ່ງຊາດ
ຫໍສະໝຸດກາງ

# ດອກສຸດທ້າຍຫລືງາມ

ໂດຍ **ດອກເກດ**

**ຈັດພິມໂດຍ**
**ກົມວັນນະຄະດີ ແລະວັດທະນະທຳມະຫາຊົນ**

ມະຫາວິທະຍາໄລແຫ່ງຊາດ
ຫໍສະໝຸດກາງ
ວັນເຂົ້າ 21-5-97
ເລກທະບຽນ 2466
ເລກໝູ່ເອກະສານ 895.919
ດກ
ລ49

**ອຸປະຖຳໂດຍ**
**ອົງການອຸຍນີເຊັບ ( UNICEF )**

ດອກສຸດທ້າຍຫລືງາມ

ໂດຍ ດອກເກດ

© ສະຫງວນລິຂະສິດ

ຈັດພິມໂດຍ ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

ອຸປະຖຳໂດຍ ອົງການອຸຍນີເຊັບ ( UNICEF )

ພິມທີ່ ໂຮງພິມສຶກສາ

ຕາມ ທ.ບ. 10 / ພທປ 071195

ພິມເທື່ອທີໜຶ່ງ 1995

ຈຳນວນ 2.000 ຫົວ

# ຄະນະຈັດພິມ

**ເຈົ້າຂອງໂຄງການ :** ກົມວັນນະຄະດີ ແລະ ວັດທະນະທຳ ມະຫາຊົນ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ

**ທີ່ປຶກສາ :** ດຣ. ທອງຄຳ ອ່ອນມະນີສອນ ຫົວໜ້າ ກົມວັນນະຄະດີ ແລະ ວັດທະນະທຳ ມະຫາຊົນ

**ຜູ້ດຳເນີນງານ :** ດາລາ ກັນລະຍາ ຄະນະກຳມາທິການ ແຫ່ງຊາດ ເພື່ອກອງປະຊຸມ ແມ່ຍິງໂລກ ຄັ້ງທີ 4, ຮອງຫົວໜ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

**ບັນນາທິການເນື້ອໃນ :** ດາລາ ກັນລະຍາ

ອຸທິນ ບຸນຍາວົງ

ບຸນທະນອງ ຊົມໄຊຜົນ

ບຸນເສີນ ແສງມະນີ

ວຽງຄໍາ ບັນທະວົງດວງສີ

**ບັນນາທິການສົມ :** ດວງເດືອນ ບຸນຍາວົງ

ໂອທອງ ຄໍາອິນຊູ

ຈະເລີນໄຊ ພົມມະວົງສາ

ຈັນເພັດ ຄໍາຟອງ

**ກອງເລຂາ :** ວຽງຄໍາ ບັນທະວົງດວງສີ ຜູ້ປະສານງານ

ຈັນສະໝຸດ ທີລະກຸນ ຜູ້ປະສານງານ

ດ້ານສື່ມວນຊົນ

ສີສຸພັນ ດວງມະນີ ບັນຊີ ການເງິນ

# ຄຳນຳ

ການພັດທະນາຊັບພະຍາກອນມະນຸດ ເປັນບັນຫາສຳຄັນຂອງແຜນພັດທະນາ ເສດຖະກິດ - ສັງຄົມຂອງລາວ. ເພື່ອຈຸດປະສົງດັ່ງກ່າວ ການອ່ານປຶ້ມເປັນປັດໄຈໜຶ່ງທີ່ຂາດບໍ່ໄດ້ເພື່ອສ້າງໃຫ້ ຄົນມີຄຸນນະພາບທັງໃນແງ່ຄວາມສາມາດ ແລະ ຄຸນນະທຳ ແລະ ປຶ້ມທຸກປະເພດ ທຸກລະດັບ ເປັນສິ່ງຈຳເປັນ. ສະເພາະປີ 1995 ນີ້ ເປັນປີສຳຄັນຂອງແມ່ຍິງທົ່ວໂລກ ໂດຍສະຫະປະຊາຊາດ ໄດ້ຈັດກອງປະຊຸມແມ່ຍິງໂລກຂຶ້ນທີ່ປັກກິ່ງນະຄອນຫລວງຂອງ ສ.ປ.ຈີນ ໃນໂອກາດດັ່ງກ່າວ ພວກເຮົາຄະນະກຳມະການ ຈັດພິມສື່ການສຶກສາສຳລັບແມ່ຍິງ ຈຶ່ງຈັດພິມປຶ້ມໂຮມເລື່ອງສັ້ນ ແລະ ບົດກະວີ ທີ່ມີເນື້ອໃນກ່ຽວກັບແມ່ຍິງຂຶ້ນ

ເພື່ອເປັນການສ້າງບັນຍາກາດຟົດຟື້ນ ໃຫ້ແກ່ກອງປະຊຸມ ແລະ ເພື່ອໃຫ້ເປັນສື່ການສຶກສາ ໂດຍຜ່ານ ບົດວັນນະຄະດີ.

ຄະນະພວກເຮົາ ຂໍຂອບໃຈອົງການ ອຸຍນີເຊັບ (UNICEF) ທີ່ໃຫ້ທຶນສະໜັບສະໜູນ ການພິມປຶ້ມຊຸດນີ້ ແລະ ຂອບໃຈບັນດານັກຂຽນ, ນັກກະວີ ທີ່ໄດ້ປະກອບສ່ວນຢ່າງ ເຕັມທີ່ ຈົນປຶ້ມຊຸດນີ້ສຳເລັດເປັນຜົນອອກມາ.

ດາຣາ ກັນລະຍາ

ຫົວໜ້າໂຄງການ,

## ແດ່...

ແມ່ ຜູ້ທີ່ອ່ານຫນັງສືບໍ່ອອກ

ແຕ່ກໍໄດ້ອຸທິດຕົນເພື່ອລູກໆ ຈົນມີວັນນີ້

ວັນທີ່ລູກ ຈັບປາກກາຂຽນເຖິງແມ່

ດ້ວຍຄວາມພາກພູມໃຈ

# ສາລະບານ


| | |
|---|---|
| ດອກສຸດທ້າຍຫລືງານ | ໜ້າ 1 |
| ແກ້ວງາມ | 32 |
| ເມື່ອແມ່ເຂົ້າຄຸກ | 34 |
| ຊີວະປະຫວັດຫຍໍ້ຂອງ ດວງເດືອນ ບຸນຍາວົງ | 69 |


ห้ามจำหน่าย

# ດອກສຸດທ້າຍຫລືງານ

ສຽງເພງຮ້ອງປະສານກັບທຳນອງເສບ ດ້ວຍເຄື່ອງດົນຕີໄຟຟ້າ ລອຍມາຕາມສາຍລົມຍາມສວາຍໃນວັນທີດນີ້ ດັງມາກະທົບໃສ່ຫູຂ້ອຍ ແຮງຈະແຈ້ງສົມຄວນ, ມັນເປັນສັນຍານບອກວ່າ ຢູ່ບໍ່ໄກບໍ່ໄກຈາກຫນີ້ມີເຮືອນບຸນ ! ຈະແມ່ນບຸນຫຍັງໃນລະດູນີ້ ນອກຈາກການຄົບງັນເຮືອນດອງ ! ຂ້ອຍແນ່ໃຈຍິ່ງຂຶ້ນເມື່ອສຽງໂຄສົກເວົ້າຂາດເປັນຂັ້ນໆ ພໍຈັບຄວາມໄດ້ວ່າ " ຂໍເຊີນ ... ເຂີຍໃຫມ່ ... ໄພ້ໃຫມ່ ອອກມາປາກົດກາຍກາງເວທີໃຫ້ພໍ່ແມ່ພີ່ນ້ອງໄດ້ຊື່ນຊົມ ... ອຸຍຈັ່ງແມ່ນງາມສົມກັນພໍປານຟ້າແຖນແມນຫລໍ່ມາໃສ່ກັນເອົາຊື່ໆ - ຮະ ຮະ ຮະ ... "

ເວົ້າຮອດເຮືອນດອງ ເຮືອນບຸນມາແລ້ວ ຂ້ອຍກໍຈັ່ງ ແມ່ນເບື່ອຍ. ສິນພີ່ນ້ອງຊາຍມັນວ່າ " ໃຫຍ່ຍ້ອນເຮືອນດີ ພີ່ຍ້ອນເຮືອນ ດອງ " ຫລື " ເຮືອນດີເຮືອນດອງ ພີ່ນ້ອງ ກັນເອງ " ຊາພວກເຮົາຊາວໜຸ່ມໜີ້ເກາະ ຖ້າຈະເວົ້າແລ້ວ ແມ່ນບໍ່ໄດ້ຢູ່ເຮືອນໃຫ້ພໍ່ແມ່ໄດ້ກິນແຮງຍ້ອນດອກ ໃນຍາມນີ້ ພັກນ່າ, ບໍ່ຈັກເຮືອນພີ່ເຮືອນນ້ອງໂຕເອງ, ເຮືອນພີ່ນ້ອງໝູ່, ເຮືອນໝູ່ໂຕເອງ, ເຮືອນໝູ່ ຂອງໝູ່ ແລະ ຕໍ່ໆກັນໄປ, ຊາຄວາມມັກມ່ວນ ມັກຫຼວໜີ້ ເກືອບບໍ່ເຫັນຮອດບ່ອນນອນ ພຸ້ນແຫລ້ວ ຈົນແມ່ຢາກຮ້າຍທັງຂ້ອຍ ທັງນ້ອງຊາຍ. ສໍາລັບ ຂ້ອຍນັ້ນ ເພິ່ນຈົ່ມວ່າ ແອ່ວຂໍເງິນຊື້ສິ້ນໃໝ່ ເສື້ອໃໝ່ເລື້ອຍ ໂພດ(ຕາມເພິ່ນວ່າ), ໂຢ້ວ ກະຂອງວ່າຂ້ອຍພວມເປັນສາວ ພວມຂຶ້ນພວມງາມ ແຖມຍັງເປັນນັກສຶກສາຊັ້ນສູງ ຢູ່ນະຄອນ ຫລວງວຽງຈັນນໍາອີກ, ມັນກໍຕ້ອງມີສັງຄົມແດ່ ມີການໄປ ການມາ, ນຸ່ງຖືສົນໜ້າສົນຕາ ສົນຖານະສັກສີ, ແຕ່ຂ້ອຍກໍບໍ່ ເຂົ້າໃຈຄືກັນວ່າ ຖານະສັກສີອັນນີ້ ແມ່ນໃຜກໍານົດໄວ້ໃຫ້ ? ແມ່ນໃຜກໍານົດໃຫ້ນັກສຶກສາຍິງ (ຄືພວກເຮົາ) ໃສ່ສາຍ

ແອວເງິນ ລາຄາເສັ້ນຊາວກວ່າພັນຂຶ້ນເມືອ, ໃສ່ເກີບຄູ່ລະ 3.000 - 4.000 ກີບ, ໃສ່ເສື້ອຜືນລະ 4.000 ກວ່າກີບຂຶ້ນເມືອ, ໃສ່ສິ້ນຜືນລະ 15 - 16.000 ກີບ ແລ້ວເຂົ້າໄປນັ່ງໃນຫ້ອງຮຽນ ເຊິ່ງບາງຄັ້ງ ສະພາບຂອງມັນໄກກັບຜູ້ນັ່ງສົນຄວນ ຖ້າເບິ່ງໄປແຕ່ນອກຫ້ອງ, ບາງບ່ອນ ຂ້ອຍບໍ່ຢາກເວົ້າຫລາຍ ມັນຮົກທໍ່ໆກັບຢູ່ຕະຫລາດ ເບິ່ງບໍ່ຈັກຖືງຢາງເຈັຍເສດ ຂີ້ຝຸ່ນ ຂີ້ດິນ ມັນໂລດບໍ່ສົມກັບເປັນບ່ອນຈະແຕ່ງອົງຊົງເຜດ ໄປອ້າງກັນເລີຍ, ແຕ່ເວົ້າແລ້ວກໍ່ເວົ້າຊື່ໆ ຂ້ອຍເອງກໍໄດ້ແຕ່ຄຶດເປັນບັນຫາຊື່ໆດອກ, ບໍ່ຢາກຄິດຮອດນີ້ທີ່ພໍ່ແມ່ບໍ່ມີເງິນຈິກໃຫ້ຊື້ສິ້ນລາຍໃຫມ່ ເສື້ອແບບໃຫມ່ເລີຍ. ຖ້າຮອດມື້ນັ້ນ ຂ້ອຍຈະເຮັດຫນ້າແບວໃດໄປເຂົ້າສັງຄົມກັບຫມູ່? ຂ້ອຍຢາກທໍາລາຍຂໍ້ກໍານົດອັນນີ້ແທ້ ໆ !

ເວົ້າຮອດເຮືອນດອງ ອາທິດນີ້ຂ້ອຍຫວາງໄປແດ່, ບ່ອນທີ່ພວມລົບງັນມ່ວນເມົາຈັດພິທີກັນຢູ່ນີ້ ເປັນເຮືອນພີ່ນ້ອງຫ່າງໆ ຢູ່ສົ້ນບ້ານ, ແມ່ເພິ່ນວ່າ ເພິ່ນໄປແລ້ວກໍຢ່າສາ

ໃຫ້ຂ້ອຍຢູ່ເຮືອນເຮັດວຽກແດ່ ຮຽນຫນັງສືແດ່ ໃກ້ຍາມສອບຍາມເສັງແລ້ວ ... ແຕ່ດອງເອື້ອຍວັນໃນວັນທີດຫນ້ານີ້ຕີ ຂ້ອຍຄືຊິເມື່ອຍຈິບຍໍແຄ່ງບໍ່ຊາຍໍຂາບໍ່ຂຶ້ນພຸ້ນລະ ເພາະເອື້ອຍວັນທີ່ວ່ານີ້ ລາວເປັນລູກສາວກົກແມ່ປ້າໃຫຍ່ ຂອງຈຸ້ມເຈື້ອພວກເຮົາ, ລາວມີຊື່ເຕັມໆວ່າ " ວັນນາລີ ສີໃສພາ " ງາມສະຫງ່າ ສົມນາມສະກຸນ ແຕ່ຮຸບອາວຸໂສແດ່ຈັກຫນ້ອຍ. ເຮືອນແມ່ປ້າຢູ່ຟາກເຮືອນຂ້ອຍໄປ ສາມ-ສີ່ ຫລັງຄາ ເຮືອນ, ຂັ້ນກັນດ້ວຍເຮືອນນ້າບ່າວນ້າສາວ ເພາະວ່າຫມົດຄຸ້ມນີ້ແມ່ນຈຸ້ມດຽວກັນຫມົດ, ຈັ່ງຊັ້ນ ຈຶ່ງແນ່ໃຈໂລດວ່າ ດອງເອື້ອຍວັນຈະເປັນດອງໃຫຍ່ສົມຄວນ ສົມລາວເປັນສາວນາດົນ ທັງເປັນລູກສາວກົກອີກ. ຈັ່ງຊັ້ນຂ້ອຍຈຶ່ງຄິດຮຸມໆໃນໃຈວ່າ " ດີຄືກັນອາທິດນີ້ຊິໄດ້ພັກຜ່ອນເອົາແຮງ, ອາທິດຫນ້າກຽມໂຕເມື່ອຍສຸດຂີດ ".

ຫລັງຈາກມ້ຽນເຮືອນ ຊັກເຄື່ອງນຸ່ງຂອງຖື ຕາມນິໄສຜູ້ມັກສະອາດມັກງາມແລ້ວ ຂ້ອຍຈຶ່ງອອກໄປຫາເອື້ອຍວັນເພື່ອສືບຂ່າວເບິ່ງສະພາບການທາງຫາ "ດອງໃຫຍ່" ໃຫ້ລັກໆ

ຈັກເທື່ອ, ຂ້ອຍພວມຢາກຮູ້ຢາກສຶກສາຊີວິດ ໂດຍສະເພາະການສ້າງຄອບຄົວຂອງເອື້ອຍວັນ ໃນຄັ້ງນີ້ ເບິ່ງຄືວ່າ ອ້າວໄວວາປຸບປັບວາດໃດວາດໜຶ່ງໄວ້, ຜີປານວ່າລາວເປັນສາວໃຈຮ້ອນອາຍຸ 18 ແລະຕາມສຽງຊຸບຊິບຊຶ່ມຊ່ຳຢ່າງບໍ່ເປັນທາງການນັ້ນ ກໍຄືວ່າ ພໍ່ແມ່ເຖົ້າແກ່ຝ່າຍຍິງພີ້ບໍ່ຢາກ "ອອນຊອນ" ນຳປານໃດ ແຕ່ເອື້ອຍວັນລາວອີງໃສ່ການຈັດຕັ້ງຢູ່ໂຮງການເປັນໃຫຍ່, ກະຂອງວ່າລາວເປັນຮອດ ພະນັກງານຂັ້ນພະແນກຄົນໜຶ່ງ ເປັນຜູ້ທາວທັນໃນສະຫະພັນແມ່ຍິງຂອງກະຊວງຊ້ຳແຖ, ຈັ່ງຊັ້ນພໍ່ລຸງກັບແມ່ປ້າ ຕ້ອງຍິນຍອມຢ່າງສຸພາບ ອີກຢ່າງໜຶ່ງ ອາຍຸລາວກໍເຂົ້າເກຍສາມແລ້ວເດຊີໃຫ້ລາວຄອງ ຮອດໃສ່ອີກ ? ຂ້ອຍເອງບໍ່ແນ່ໃຈວ່າ ພວກຜູ້ໃຫຍ່ ( ເຖົ້າແກ່ ) ຕຳໜິອະຣິລາວບ່ອນໃດ ອັນຜູ້ຈະມາເປັນອ້າຍເຂີຍຂ້ອຍທັ້ນກະດາຍ ! ຊາຟັງຄວາມເພິ່ນທັ້ນ ຄືວ່າບໍ່ມີແນວໃດເໜາະສົມກັບເອື້ອຍວັນຈັກໜ້ອຍ, ເພິ່ນວ່າລາວຮອດບໍ່ໄດ້ຜ່ານປະເທດນອກປະເທດນາ ຫາໃບປະກາດຊັ້ນສູງກໍບໍ່ເຫັນ, ເປັນກຳພ້າກຳພອຍ ສືບສາວຫາວຫາຍາດພີ່ນ້ອງກໍບໍ່

ເຫັນ ... ໂຢ້ວ ! ຊາໃຈ້ຂ້ອຍນີ້ໂລດວ່າ ອັນໃບ ປະກາດນັ້ນ
ມັນບໍ່ໄຊ້ແມ່ນແນວຢູ່ແນວກິນໄດ້. ກະດາດວ່າແມ່ນວຽກ
ງານການ ປະກອບອາຊີບພໍ້ ມັນຊິພາກ້າວ ຫລືບໍ່ກ້າວ.
ໃບປະກາດມັນກໍເປັນພຽງໃບເບີກທາງສໍາຮອງເທົ່ານັ້ນແລ້ວ
ກະຍາດພີ່ນ້ອງນັ້ນ ມັນຊິສໍາຄັນພໍຮາວໃດ. ຖ້າເຮົາດີ ເຮົາ
ເດັ່ນຂຶ້ນມາ ບໍ່ຢ້ານແຕ່ພີ່ນ້ອງຊິສືບສາວຫາວຫາ. ຄືເພິ່ນວ່າ
" ເຮັດເປັນມີ ຈິ່ງເຫັນຫນ້າປ້າ ເຮັດບໍ່ເປັນມີ ນ້າຜູດຽວກໍ
ເປັນເພິ່ນ " ຫັ້ນແລ້ວ. ຄັນວ່າລາວບໍ່ເຫມາະ ບໍ່ສົມກັບເອື້ອຍ
ວັນ ທາງການຈັດຕັ້ງເພິ່ນກໍຄົງບໍ່ອະນຸມັດດອກ ເພາະເອື້ອຍວັນ
ລາວກໍເປັນຮອດຄະນະພະແນກ ແລະ ອ້າຍສິດ ກໍເປັນຮອດ
ຄະນະກົມ ເຖິງວ່າລາວບໍ່ມີເຮືອນຊານ ເປັນຂອງຕົນ
ແຕ່ການຈັດຕັ້ງກໍມີຫ້ອງພັກໃຫ້ລາວ (ຍ້ອນວ່າລາວມາ
ແຕ່ຕ່າງແຂວງ) ຈັ່ງຊັ້ນ ເບິ່ງໃນແງ່ຖານະຕໍາແຫນ່ງແລ້ວ
ຂະເຈົ້າກໍ່ເປັນຄູ່ຊີວິດທີ່ເຫມາະສົມກັບສົມຄວນ. ພໍ່ລຸງແມ່ປ້າ
ເພິ່ນຕັ້ງວ່າເປັນຄົນຫົວເກົ່າ ຖືຮີດເດີມ ແຕ່ຖ້າຈະເວົ້າໄປ
ອີກແງ່ຫນຶ່ງ ຄັນວ່າເອື້ອຍວັນລາວມີຄຸນສົມບັດຮອບດ້ານພໍແຮງ

ແລ້ວ ເປັນຫຍັງລາວຈຶ່ງຄອງຄວາມໂສດ ຢູ່ໂດດດ່ຽວມາຈົນຮອດວັນນີ້ ? ທັງງາມ ທັງມີຄວາມຮູ້ ຖານະຄອບຄົວຫມັ້ນຄົງຫນັກແຫນ້ນ ... ແລ້ວເປັນຫຍັງຈຶ່ງບໍ່ມີຜູ້ມາມັກລາວ ? ຫລືວ່າມີແລ້ວ ແຕ່ລາວບໍ່ຖືກໃຈ ເລີຍປະຕິເສດ ? ຫລືວ່າລາວຖືກໃຈຢູ່ ແຕ່ຜູ້ໃຫຍ່ບໍ່ເຫັນດີເຫັນງາມນຳ? ໂອ້ຍຈັ່ງແມ່ນມີຫລາຍບັນຫາ ... ແລ້ວມາຮອດເວລານີ້ ລາວກໍ່ຊ້ຳຕົກລົງປົງໃຈກັບຊາຍຄົນນີ້ ! ຊາຍທີ່ພໍ່ແມ່ພີ່ນ້ອງບໍ່ອອນຊອນຊົມຊື່ນນຳປານໃດຄົນນີ້ ! ...

ເດີ່ນຫນ້າບ້ານຂອງເຮືອນພໍ່ລຸງ ແມ່ປ້າໃຫຍ່ ເປັນສວນດອກໄມ້ແບບລາວໆ ປະສົມສະໄຫມໃຫມ່ ເອີ້ນໄດ້ວ່າເປັນສະຖານທີ່ພັກຜ່ອນຢ່ອນໃຈໄດ້ດີສົມຄວນ ຖັດຈາກຖັນແຖວຕົ້ນໄມ້ໃຫຍ່ກິນຫມາກ ທີ່ລາມຕໍ່ໃສ່ຮົ້ວດ້ານຫນຶ່ງ ແມ່ນພວກພືດພຸ່ມ ກໍ່ດອກໄມ້ນາໆພັນ ມັນແມ່ນອຸທິຍານແຫ່ງ ບຸບຜາພັນຫລາກຫລາຍ ທີ່ສູງເດັ່ນທຽມກຳແພງຮົ້ວ ແມ່ນຕົ້ນຈຳປາສີແດງ ຂາວ, ຕົ້ນຄູນ, ບາງຕົ້ນພວມອອກດອກຊູຊໍ່ອວດອ້າງພວງດອກຂອງຕົ້ນ ຢ່າງທໍ່ລະນີງອີ່ງອວດ, ພຸ່ມດອກ ຕ່ຳເຕ້ຍ

ກໍມີຫລາກຫລາຍ ເບິ່ງແລ້ວຈົບລາຍຕາ ມີທັງອິນທະຫວາ ດອກຊ້ອນ ຈຳປີ ດາວເຮືອງ ພຸດທະຊາດ ກາບກອງ ກຸຫລາບ ເບັນຈະມາດ ຫອມເດິກ ຫອມໄກ ງວງຊ້າງ ຝາງແດງ ... ແນ່ຕູ່ໄວ 80 ກວ່າຂອງພວກເຮົາຢູ່ນຳແມ່ປ່າໃຫຍ, ເພິ່ນມັກຫາແນວດອກໄມ້ລາວ ທີ່ມີສີຂາວ ກິ່ນຫອມມາປູກໄວ້ພໍໄດ້ເກັບໄປວັດ ແລະ ຂຶ້ນບູຊາຮ້ານພະເປັນປະຈຳ, ບໍ່ວ່າລະດູໃດຈະແລ້ງຫລືຝົນ ສວນດອກໄມ້ຂອງເຮືອນແມ່ປ່າ ຈະມີດອກບານງາມຕະການຕາຕະຫລອດເວລາ, ນອກຈາກດອກໄມ້ປະເພດຜູ້ເຖົ້າມັກແລ້ວ ພວກລູກຫລານຜູ້ຫນຸ່ມນ້ອຍ ຊ້ຳຫາດອກໄມ້ປະເພດເປັນໃບສີ ເຊັ່ນບອນລາຍ, ຫວ້ານ, ເຢເບຣາ ແລະອື່ນໆ, ຊະນິດປູກໃສ່ແອ່ງດິນກໍມີ ໃສ່ກະຖາງຫ້ອຍຕາມເສົາຕາມລະບຽງກໍມີ. ຈັ່ງຊັ້ນບໍລິເວນອ້ອມຮອບເຮືອນເອື້ອຍວັນ ຈຶ່ງຂຽວອຸ່ມທຸ່ມ ແລະ ມີສີສັນຊວນຊົມຢ່າງແທ້ຈິງ.

ບັນຍາກາດອ້ອມຮອບເຮືອນ ມິດມີສະຫງົບ ບໍ່ຄືວ່າຈະເປັນເຮືອນດອງ ( ຕາມສະໄຫມນີ້ ) ໃນອີກບໍ່ເທົ່າໃດມື້ຊ້ຳ. ຂ້ອຍຍ່າງເລີຍຂັ້ນໄດຂຶ້ນເມືອ ແລວລວງໃສ່ຫອງໂລງໃຫຍ

ໄດ້ຍິນສຽງເພງດັງວ່ອນໆ ອອກມາແຕ່ໃນເຮືອນ.

- ອາວແກວເກສອນ ມາແຕ່ຫວ່າງໃດ ? ເອື້ອຍວັນ ນັ້ນເອງ. ລາວຄົງໄດ້ຍິນສຽງບາດຕີນ ອາວບໍ່ຄອຍຂອງຂ້ອຍ ຈຶ່ງໄປໂລອອກມາ ແລະ ຮ້ອງທວງໜົດຊື່ສຽງຮຽງນາມເອົາຊື່ໆ ຂ້ອຍຍິ້ມໃສ່ລາວ ແລ້ວຍ່າງນຳເຂົ້າໄປໃນຫ້ອງນອນສ່ວນຕົວ.

- ເອື້ອຍວັນພວມມ້ຽນຫ້ອງ, ຊິເອົາເຄື່ອງໃຫມມາ ໃສ່ຫວະ ? ມານ້ອງຊິມ້ຽນຊ່ອຍ, ແຕ່ເອະ ຕູ້ຕຽງຫມູ່ນີ້ ຄືຊິໜັກແທ້ ເຮັດແນວໃດພວກເຮົາຊິຍ້າຍມັນໄຫວ ? ເອີ້ ອ້າຍວິສິດ ຊິບໍ່ມາຊ່ອຍແດ່ເບາະ ? ຂ້ອຍປ້ອນຄຳຖາມ ຄຳເວົ້າຕິດໆກັນອອກໄປ ຕາມພາສາຄົນມັກລົມ ທັງອິນປຶ້ມ ຈຳນວນໜຶ່ງອອກຈາກຕູ້ຊ່ອຍລາວ, ເອື້ອຍວັນບໍ່ຕອບຄຳຖາມ ຂໍ້ໃດຂອງຂ້ອຍເລີຍ, ລາວມິດໄປຊື່ໆ ເຮັດໃຫ້ຂ້ອຍຕ່າງໃຈ ຈຶ່ງເຊົາວຽກຄານີ້, ແນມເບິ່ງລາວຢ່າງກົງໆ, ຮອຍຍິ້ມ ຂອງເອື້ອຍວັນ ບໍ່ສົດໃສເບີກບານຄືຜູ້ກຽມຕົວຈະເປັນເຈົ້າສາວ ເຂົ້າພິທີແຕ່ງດອງ ກັບຊາຍທີ່ຕົນເລືອກແລ້ວເລີຍ.

- ພວກເອື້ອຍບໍ່ໄດ້ຊື້ເຄື່ອງຫຍັງໃຫມດອກແກ້ວ,

ເອົາເຄື່ອງຂອງທີ່ໃຊ້ຢູ່ຫນີ້ແລ້ວ, ເອື້ອຍຄິດວ່າມັນບໍ່ຈຳເປັນ.

- ບໍ່ຈຳເປັນ ... ໂອະ ແມ່ນແທ້ໄດ໋ເນາະເອື້ອຍວັນ, ຕູ້ຕຽງຂອງເອື້ອຍຊຸດນີ້ຍັງງາມ ຫນາແຫນ້ນ ເບິ່ງແມ້ ... ຫນັກຊິຕາຍ ຕູດກໍບໍ່ຕິງ ໄມ້ເນື້ອດີຂະຫນາດລະຫນີ້ ! ຂອຍເວົ້າທັງເອົາຝ່າມືລູບຄຳໄປຕາມເນື້ອໄມ້ກຽງຫມື່ນ ສີແດງຊ້ຳຕາມທຳມະຊາດໄປມາຢ່າງອອນຊອນ.

- ເວົ້າແທ້ແລ້ວ ຕູ້ງາມໆ ເນື້ອໄມ້ດີໆຂະຫນາດນີ້ຫາຊື້ບໍ່ໄດ້ງ່າຍໆດອກເດີ້ ດຽວນີ້ນາ, ເບິ່ງຕຽງຫນີ້ກະເທິງສູງເທິງກວ້າງ ສີເຂັ້ມກັບຕູ້ດີແລ້ວ, ບອງວ່າຕື່ມຜ້າກັ້ງສີບົວອອນໃສ່ກັບຜ້າປູຕຽງ ລາຍເຄືອດອກສີບົວ ແກມສີເຫລືອງຄືຈະເຮັດໃຫ້ຫ້ອງນີ້ສົດໃສຂຶ້ນຕື່ມເນາະ !

ເອື້ອຍວັນຍິ້ມສົດໃສຂຶ້ນແດ່ ຂອຍຄຶດວ່າໂຕເອງຄົງເວົ້າແນວຖືກໃຈລາວ ຈຶ່ງເວົ້າຕໍ່ວ່າ :

- ບອງວ່າເຄື່ອງໃຊ້ຂອງສອຍ ມັນບໍ່ສຳຄັນທໍ່ກັບເອີ້ ...ຄວາມເຂົ້າໃຈກັນດີດອກ ເນາະເອື້ອຍ.

- ເອື້ອຍກໍຄິດຄືແນວນັ້ນແລ້ວ ແຕ່ຫນາເສຍດາຍ

ຫລາຍຄົນບໍ່ຄິດຄືເຮົາ ! ນ້ຳສຽງຂອງເອື້ອຍວັນແຝງສຳນຽງສຽດສີ ເຖິງວ່າສີໜ້າຂອງລາວ ຈະເບີກບານຍິ້ມແດກໍ່ຕາມ.

- ຜູ້ອື່ນບໍ່ຄິດກໍ່ຂໍໃຫ້ອ້າຍວິສິດຄິດຄືເອື້ອຍເປັນພໍ່ເນາະ ! ຂ້ອຍເວົ້າຢອກໃຫ້ລາວຫົວ, ໄດ້ຜົນ ເອື້ອຍວັນຫົວຍາມບາດໜຶ່ງ.

- ເອື້ອຍກໍ່ວ່າແນວນັ້ນລະ ຈຶ່ງຕັດສິນໃຈ. ຄຳເວົ້າສຸດທ້າຍຂອງເອື້ອຍວັນ ສຽດຕຳບັນຫາທີ່ຂ້ອຍຢາກຮູ້ຢູ່ແລ້ວ ຈຶ່ງຄຸບໂອກາດອັນອຳນວຍນີ້ທັນທີ. ບັດນີ້ ຂ້ອຍພໍຮູ້ລາງໆ ແດ່ແລ້ວວ່າ ເຫດຜົນໜຶ່ງຂອງລາວແມ່ນຫຍັງ.

- ເອື້ອຍວັນ ! ນ້ອງຂໍໂທດລ່ວງໜ້າເດີ ຖ້າວ່າຄຳຖາມຂອງນ້ອງບໍ່ເໝາະສົມ ຄືວ່ານ້ອງດີໃຈແທ້ໆ ທີ່ເອື້ອຍຊິມີຄວາມສຸກ ... ທັງການຈັດຕັ້ງກໍ່ເຫັນດີເຫັນພ້ອມແນວນີ້ ກໍ່ແປວ່າເພິ່ນເຫັນຄວາມເໝາະສົມເນາະ ແຕ່ນ້ອງບໍ່ເຂົ້າໃຈ, ນ້ອງບໍ່ແຈບໃຈນຳທາງພໍ່ແມ່ພີ່ນ້ອງເຮົາ. ເພິ່ນຄືວ່າບໍ່ເອີ້ບໍ່ຫືນຳປານໃດ ເປັນຫຍັງເນາະ ?

- ແກ້ວເອີຍ, ຄົນເຮົານີ້ ບໍ່ແມ່ນວ່າຊິເຮັດໄດ້ຖືກໃຈໝົດ

ທຸກຜູ້ທຸກຄົນໄດ້ດອກເດີ້, ບາງເທື່ອ ໄດ້ໃຈຕົນເອງແຕ່ເຄິ່ງດຽວນັ້ນກໍຍັງດີພໍແຮງແລ້ວ. ພໍ່ແມ່ພີ່ນ້ອງເຮົາ ເພິ່ນກໍຫາກມີເຫດຜົນແບບເກົ່າແບບເດີມຂອງເພິ່ນນັ້ນແລ້ວ, ນັບແຕ່ເອື້ອຍອາຍຸ 15 ຮອດດຽວນີ້ 29 ປີ, ເພິ່ນຫາກເຈົ້າກີ້ເຈົ້າການເອື້ອຍມາຕະຫລອດ ບໍ່ເຫັນໃຜເຫມາະໃຜສົມຈັກເທື່ອ ຍ້ອນແນວນີ້ລະເອື້ອຍຈຶ່ງຕັດສິນໃຈເອົາເອງ. ເອື້ອຍຄິດວ່າເອື້ອຍຮູ້ເຫັນເຂົ້າໃຈຊີວິດມາພໍສົມຄວນແລ້ວ ! ນ້ຳສຽງຂອງເອື້ອຍວັນແຝງຄວາມຂົມຂື່ນອາດໃດອາດຫນຶ່ງ; ເວົ້າແທ້ແລ້ວ ເອື້ອຍບໍ່ໄດ້ຕັດສິນຜູດຽວດອກ, ທາງການຈັດຕັ້ງເພິ່ນກໍຊອຍ.

- ນ້ອງບໍ່ເຂົ້າໃຈ ເຫດຜົນແບບເກົ່າໆຂອງເພິ່ນທັ້ນມັນແມ່ນແນວໃດແທ້ຣືເອື້ອຍ ?

- ກະຮຽກຮ້ອງໃຫ້ເຂົາມີຄຸນສົມບັດຮອບດ້ານທັ້ນຕີ, ນັບຖືພໍ່ປ້ານ້າອາ, ມີຄວາມຮູ້ ມີຍາດພີ່ນ້ອງຫລາຍ ໂດຍສະເພາະໃຫ້ມີຄວາມຮູ້ສູງ ມີຖານະຕຳແຫນ່ງດີໆ, ຮູບຮ່າງຫນ້າຕາພໍໄປວັດໄປວາ, ໂອຍຫມົດທຸກແນວທັ້ນລະ, ແລ້ວນ້ອງຄິດບໍ່ລະວ່າແມ່ຍິງຄືພວກເຮົາຊິບໍ່ຢາກໄດ້ ເອີຄູ່ຊີວິດແນວນັ້ນ? ເຮົາຕ້ອງ

ຕັດສິນໃຈເອງ, ແມ່ນໃຜຊິມີຄຸນສົມບັດເລີດລ້ຳທຸກຢ່າງເນາະ ແຕ່ນັ້ນມັນບໍ່ແທດເໝາະກັບ ຄວາມຈິງສະເໝີດອກ, ຄົນເຮົາແຕ່ລະຄົນຕ່າງກໍມີຈຸດດີຈຸດອ່ອນຢູ່ໃນຕົວ.

- ຊັ້ນລະຕິເນາະ ເອື້ອຍຈຶ່ງຕັດສິນໃຈແບບນີ້ !

ຂ້ອຍອອກຄວາມເຫັນຄອຍໆ, ແນ່ນອນວ່າມັນຄົງບໍ່ຖືກໃຈລາວຫລາຍປານໃດ, ແຕ່ສີໜ້າເອື້ອຍວັນບໍ່ບູດ ບໍ່ຍິ້ມ ມັນບົ່ງບອກຄວາມສົງໄສລັ່ງເລ, ຄາວໜຶ່ງລາວຈຶ່ງຍິ້ມ ແລ້ວກວັກມືເອົາຂ້ອຍໄປຫາ ແລ້ວພາຍ່າງໄປເທົ້າແຂນໃສ່ແຄມປ່ອງຢ້ຽມ ທີ່ໄຂອອກສູ່ສວນໜ້າບ້ານ.

- ແກ້ວ ! ເບິ່ງດອກໄມ້ໃນສວນພັ້ນຕິ

- ງາມ ! ຂ້ອຍງຶກຫົວຕອບທັນທີ ໂດຍບໍ່ໄດ້ຄິດຍາກ.

- ສົມມຸດຈັ່ງຊີ້ເນາະ ເອື້ອຍຊິໃຫ້ນ້ອງໄປເລືອກເດັດດອກໄມ້ດອກໜຶ່ງ ເຊິ່ງນ້ອງເຫັນວ່າງາມທີ່ສຸດມາໃຫ້ ໂດຍມີກົດເກນວ່າ ນ້ອງຈະບໍ່ເລືອກມັນເປັນຄັ້ງທີ 2, ບໍ່ໃຫ້ຫວນກັບມາອີກ, ກາຍໄປແລ້ວ ຕ້ອງໄປເລີຍ, ເຂົ້າໃຈບໍ່ ?

ຂ້ອຍງຶງງວຍຕໍ່ຄຳອະທິບາຍກົດເກນຢູ່ຄາວໜຶ່ງ.

- ບໍ່ໃຫ້ເລືອກເປັນເທື່ອທີສອງ, ແປວ່າແນວໃດ ?

- ຖ້ານ້ອງໄປເຫັນດອກຫນຶ່ງ ແລ້ວບໍ່ເດັດບໍ່ເລືອກ ກໍໃຫ້ກາຍໄປເລີຍ, ກັບຄືນມາເອົາອີກ ບໍ່ໄດ້ຊື່ໆນີ້ແລ້ວ !

- ໂອະ ເຂົ້າໃຈແລ້ວຊັ້ນນະ ! ຂອຍຟ້າວຮັບຄວາມ ແລະ ເຫັນວ່າກົດເກນນີ້ເປັນກົດເກນຫລິ້ນໆ ແບບທຳມະດານີ້ເອງ.

- ຊັ້ນກໍລົງມືເລີຍ, ດຽວນີ້ເກືອບ 11 ໂມງແລ້ວ, ທົດລອງເບິ່ງວ່າ ນ້ອງຊິໃຊ້ເວລາດົນປານໃດ ເພື່ອເລືອກເອົາ ດອກທີ່ງາມສຸດໃຈຂອງນ້ອງ ! ເອື້ອຍວັນສັນທິວ ເມື່ອຍ່າງ ອອກມາສົ່ງຂ້ອຍຮອດຕີນຂັ້ນໄດ.

ແສງແດດຕອນສິບເອັດໂມງປາຍຍາມເຊົ້າ ຮ້ອນແຮງ ສົມຄວນ ນັບວ່າບໍ່ແມ່ນເວລາອັນເຫມາະສົມ ທີ່ຈະເກັບ ດອກໄມ້ເລີຍ, ແນ່ນອນກີບດອກໄມ້ບາງຊະນິດກໍບໍ່ທົນທານ ຕໍ່ແດດຕໍ່ລົມ ແຕ່ບາງຢ່າງກໍສູ້ທົນຕາກແດດຕາກຝົນ ໂດຍບໍ່ຊ້ຳຊອກຫຍັງ ສາມາດຊົງຕົວຢູ່ຢ່າງສະຫງ່າງາມໄດ້.

ກົກສວນແມ່ນຈຳພວກ ດອກໄມ້ຕົ້ນຕ່ຳເປັນພຸ່ມກໍ,

ແມ່ນດອກໄມ້ພື້ນບ້ານເຮົາເອງ ເຊິ່ງແມ່ຕູ້ ເປັນຜູ້ຮັກສາແນວໄວ້. ຢູ່ໃກ້ຕາກວ່າໝູ່ແມ່ນກໍອິນທະຫວາ, ຕົ້ນເກົ່າແກ່ແລ້ວ ເພາະລຳໃຫຍ່ ມີດອກຈູມ ແລະ ບານຊອນແຊມເປັນຍ່ານ. ເວົ້າແທ້ອິນທະຫວາບໍ່ແມ່ນພືດປູກປະດັບປະດາ ແຕ່ກິ່ນຫອມອ່າວຮຸນແຮງ ແລະ ສີຂາວບໍລິສຸດຂອງມັນຊ່ອຍໃຫ້ມັນ ໄດ້ຮັບເລືອກເປັນດອກໄມ້ບູຊາ, ໃສ່ຂັນ ຍາມນີ້ບຸນທາງສາສະໜາ, ກີບອ່າວນຸ່ມໜາຂອງມັນອ່ອນນວນນີ ແຕ່ເຮົາບໍ່ສາມາດຕັດອິນທະຫວາປັກແຈກັນແຊມກັບດອກອື່ນໆດອກ ... ຮູບໂສມຂອງມັນບໍ່ມີຫຍັງສະດຸດຕາເລີຍ ຊ້ຳຍັງມັກແຫ່ວໄວ, ມີແຕ່ກິ່ນຢ່າງດຽວເທົ່ານັ້ນ ທີ່ເປັນສະເໜ່ໃນຕົວ. ຊັ້ນອິນທະຫວາກໍບໍ່ແມ່ນດອກໄມ້ທີ່ງາມກວ່າໝູ່ແລ້ວ ! ຂອຍວາງມືຈາກການຂຽວມີກີບກິກຊ້ອນແຂ່ງໆຂອງມັນ ດ້ວຍຄວາມຮູ້ສຶກບໍ່ອາໄລອາວອນພໍດີ້. ດອກພຸດພຸ່ມຕ່ຳກວ່າສອງສາມກໍຢູ່ຕິດໆກັນພວມອອກດອກຂາວກະຈ່ະເຕັມຕົ້ນ. ຮຶດອກພຸດ ! ຖ້າປຽບໃສ່ອິນທະຫວາ ກະຍັງເປັນຮອງຢູ່. ກີບອ່ອນທ້າໃບຊ້ອນຢາຍກັບແບບທຳມະດາໆ ບໍ່ມີສີລະປະລວດລາຍອັນໃດ



ມະຫາວິທະຍາໄລແຫ່ງຊາດ
ຫໍສະໝຸດກາງ

ເປັນດອກໄມ້ທີ່ໄຮ້ເກສອນ, ກິ່ນຫອມພໍຮູ້ສຶກ, ມັນຮຽບຮ້ອຍ ເປີດແປນກະຈ່າງຕາດີຢູ່ດອກ. ແຕ່ໃຜເຄີຍຕັດດອກພຸດ ຂຶ້ນເອ້ສຽບແຈກນເຕົ້າລະ ? ມັນພຽງແຕ່ຄອຍຈະຖືກ ຕັດເປັນພວງກ້ານອ່າວຍາວໃສ່ຂັນເງິນເພາະບຸນ ຫລືຂຶ້ນບູຊາ ຮ້ານພະເທົ່ານັ້ນແລ້ວ. ຂ້ອຍຫັນໜ້າໜີຈາກພຸ່ມດອກພຸດ ໂດຍບໍ່ເສຍເວລາຄຶດນຳພໍນາທີ !

ລຽບຮົ້ວຕິດໆ ກັບກໍດອກພຸດ ມີຫັງການກອງ ດາວເຮືອງ ສີສະຫວ່າງຕາ ສົດໃສປະທະກັບເລົາ ແສງແດດສີເຫລືອງ ຍາມໃກ້ທ່ຽງ ຍິ່ງຄືຮຸ່ງໂຮງ, ເບິ່ງແລ້ວໜ້າຊົມບໍ່ໜ້ອຍ. ຂ້ອຍຫຍັບເຂົ້າ ໄປຫາເດ່ມືຊ້ອນດອກໜຶ່ງພວມບານເບັ່ງ, ກົ້ມຫົວລົງຫວັງເຊີຍຊົມດົມກິ່ນ, ແຕ່ຟ້າເອີຍ ! ຂ້ອຍວາງມື ຢ່າງສະຫມອງບໍ່ທັນໄດ້ສັ່ງ ! ຈັ່ງແມ່ນຂ້ອຍບໍ່ມັກກິ່ນດອກ ດາວເຮືອງ ! ບາງຄົນອາດຈະວ່າຫອມ ຫລືບໍ່ເດືອດຮ້ອນ ຍາມດົມ ແຕ່ສຳລັບຂ້ອຍນັ້ນ ເຄີຍວິງວຽນຫົວຍ້ອນກິ່ນ ດອກໄມ້ນາແລ້ວ. ຈັ່ງຊັ້ນ ດາວເຮືອງຈຶ່ງເປັນດອກໄມ້ຂີວ ສຳລັບຂ້ອຍ, ຂ້ອຍເຫັນວ່າມັນເປັນດອກໄມ້ທີ່ພໍແນມຊົມໄດ້

ຢູ່ໄກໆເທົ່ານັ້ນ, ຮູບໂສມ ແລະ ສີສັນຂອງມັນ ຊ່ອຍໃຫ້ດາວເຮືອງ ມີບົດບາດ ໄດ້ຂຶ້ນປະດັບເຫິງພາຂວັນ ແຕ່ງດອງ, ພາຂວັນ ບາສີປີໃຫມ່, ພາຂວັນອອກກຳ, ເຫນັບຫມາກເບັງ ອ້ອມຮອບ ໂລງສົບ ແລະ ອື່ນໆ, ຖືກນຳໄປຮ້ອຍເປັນພວງມາໄລ ປະດັບປະດາ ແຕ່ຈະໃຫ້ເກັບດາວເຮືອງຂຶ້ນໃສ່ເຕົ້າເອ້ຢູ່ໃນ ຫ້ອງນອນ ຫລື ຫ້ອງຮັບແຂກຫວະ ໂອຍເປັນໄປບໍ່ໄດ້ດອກ, ມັນເຫມາະສົມແຕ່ຈະຍົ້ມສົດໃສເທິງພາບາສີນັ້ນແລ້ວ ບໍ່ສົມຄວນແຕະຕ້ອງໃຫ້ກິ່ນຂີວຕິດມືເລີຍ.

ດອກກ້ານກ່ອງທີ່ຢູ່ຕິດໆກັນກັບ ຕົ້ນດາວເຮືອງ ກໍ່ສົມ ຊື່ແທ້ໆ ເບິ່ງພຸ່ມ ! ກອງງອມລົງ ກົ້ນລົງທຸກດອກ, ບໍ່ມີ ສະຫງ່າລາສີອັນໃດເລີຍ, ກີບອ່າວບາງດ້ານຫ້າກີບ ຕີວົງລ້ອມ ອ້ອມເກສອນແບບກະຮາງ ກະຮົ່ງ, ຈະເອົາດອກໄມ້ ແນວນີ້ໄປປັກແຊມເອ້ບ່ອນໃດ ຈຶ່ງຈະສະຫງ່າອົງອາດ. ບໍ່ ! ບໍ່ເອົາ ດອກກ້ານກ່ອງໃຫ້ຫາອງໂຄ້ງສົມຊື່ ໃຫ້ມັນກົ້ມກອງຢູ່ເທິງຕົ້ນ ຂອງມັນ ເບິ່ງແລ້ວເປັນຕາດູຕົນ ເວທະນາຫລາຍກວ່າ.

ສູງເຫນືອພຸ່ມດາວເຮືອງ ແລະ ຢູ່ຫ່າງອອກໄປຫນ້ອຍຫນຶ່ງ

ແມ່ນຕົ້ນດອກຄູນ ແລະ ຈຳປາ. ດອກໄມ້ຊັ້ນສູງ ! ຫມາຍຄວາມວ່າຕ້ອງໃຊ້ໄມ້ສາວແຫມ້ນເອົາ ຢື້ເກັບບໍ່ເຖິງ ! ເວົ້າແທ້ແລ້ວ ຂ້ອຍເຫັນວ່າ ຈຳປາກີບຂາວແກມເຫລືອງ ເປັນດອກໄມ້ທີ່ຫນ້າຮັກ ຫນ້າຖະຫນອມບໍ່ຫນ້ອຍ. ກິ່ນຫອມ ອົບອວນເວລາຢູ່ນຳກັນເປັນຈຳນວນຫລາຍ, ສີເຢັນຕາ, ກີບອ່ອນລະມຸນນວນມື, ຫາກີບຊ້ອນ ຊ້ອນກັນຫນຽວແຫນ້ນ ຍາມພານກໍຍັງຊ້ອນເປັນຫລີບ ແນມເບິ່ງສະອາດຕາ ຄ້າຍໆເດັກ ນ້ອຍຫາກໍ່ ອາບນ້ຳແລ້ວໃຫມ່ໆ ຫອມຮ່ວນຫນາດົມຫນ້າຊົມ ຫນ້າຮັກໄປຫມົດ. ຂ້ອຍແຫງນຄໍແນມຫາພວງຈຳປາກີບຂາວ ແກມເຫລືອງ ແຕ່ແສງຕາຟາດເລີຍໄປເຫັນຈຳປາສີແດງ ແປກປະຫລາດ ຢູ່ແຈຮົ້ວ. ເວົ້າແທ້ແລ້ວຈຳປາຂາວນີ້ ໃຜໆກໍເຄີຍເຫັນມາຈົນພໍແຮງແລ້ວລະ ! ແຕ່ຈຳປາສີແດງ ຄ້າຍກີບບົວຫອງນີ້ຕີ ມັນງາມເລີກແຝງສະເຫນ ເບິ່ງບໍ່ຄັກ ຄ້າຍຜ້າກຳມະຍີ່ ເປັນຈຳປາພັນໃຫມ, ຈັກແມ່ນໃຜນຳມາປູກ ກ່ອນ, ຢູ່ວຽງຈັນຂ້ອຍເຫັນມີຢູ່ບໍ່ເທົ່າໃດຕົ້ນ. ເປັນຫຍັງຄົນຈຶ່ງ ບໍ່ນິຍົມປູກເນາະ ທັງໆທີ່ວ່າມັນງາມ ແລະ ກໍປູກງ່າຍດີຢູ່ ?

ໂດຍສະເພາະ ມັນບໍ່ແມ່ນຕົນໄມ້ໃຫຍ່ສູງສຽດສາຍໄຟຟ້າ. ຖ້າປູກຢາຍໄປຕາມແຄມຖະໜົນ ກໍຈະໃຫ້ທັງຮົ່ມໃຫ້ທັງຄວາມງາມ ໃນຍາມມັນອອກດອກບານ.. ຂ້ອຍຍ່າງໄປຫາຕົ້ນຈຳປາ ມີດອກຫລົ່ນແຫ້ວຢູ່ຕາມໜ້າດິນ. ຕົ້ນສູງຖອມທີ່ວຫລາຍສອກ ຖ້າຈະເກັບກໍຕ້ອງຫາສາວມາແຫນນເອົາ ຮື !ແຫນນດອກຈຳປາຫວະ ? ຂ້ອຍບໍ່ມັກເລີຍ ຢ້ານຢາງມັນຍ້ອຍຮາດໜ້າ ຖືກເສື້ອຜ້າ ແລະ ດອກຈຳປາ ເວົ້າກໍເວົ້າເທາະຖ້າແຕກອອກຈາກກົບເປັນດອກດຽວໆແລ້ວ ກໍບໍ່ເຫັນວ່າຊິງາມພິລຶກພິລໍ້າ ດອກມັນງາມຍາມຢູ່ເປັນພຸ່ມເປັນພວງຫລືຮ້ອຍຮວາດຂຶ້ນເອພາຂວັນ ... ຖ້າເດັດອອກມາດອກໜຶ່ງດອກດຽວແລ້ວ ກໍບໍ່ຊ່າງວ່າຈະເອົາເພິ່ນໄປເອໃສ ທັງກໍແຫ້ວແຫ້ງໄວສົມຄວນ ກີບຊ້ຳເປັນສີນ້ຳອ້ອຍໂລດ. ຮື ...ຂ້ອຍຫັນໃຈໃຫຍ່, ຢ່າເລີຍ ແນມໄປທາງສົ້ນສວນອີກເບື້ອງໜຶ່ງຍັງເຫັນດອກໄມ້ເດຍລະດາດເຕັມໄປໝົດຢູ່. ພຸ່ມແມນດອກຫຍັງນໍ້ສີແດງແສດ ຕົ້ນຕ່ຳໆ ປົນຢູ່ກັບຈຳພວກພິດພຸ່ມບໍ່ມີດອກ.

ຂ້ອຍຖອຍອອກຈາກຮົ່ມເງົາຂອງຈຳປາແດງ ຫລູບໃສ່ພຸ່ມ

ດອກໄມ້ສີແດງສົດໃສ ທີ່ຊູຊໍ່ອວດອ້າງ ກາງພຸ່ມຫຍ້າສີຂຽວ ກະດຽວວ່າແມ່ນດອກຫຍັງ ? ທີ່ແທ້ໂລດແມ່ນ ດອກຫອນໄກ່ ກັບດອກສາມປີ ຫລຽວມາແຕ່ໄກຄືວ່າງາມກະດໍ້ ຟ້າເອີຍ ! ຂ້ອຍບໍ່ເຂົ້າໃຈເລີຍວ່າ ເພິ່ນປູກດອກອັນນີ້ໄວ້ເຮັດຫຍັງ ? ເອີ້ດອກສາມປີນັ້ນ ກໍສິນຊີ້ມັນແລ້ວລະ ບໍ່ຫລຽວບໍ່ຕົກສີ ກີບແຂງຫຍະມື. ບໍ່ຢາກເອີ້ນວ່າກີບດອກ ເພາະມັນບໍ່ນຸ່ມ ນວນອ່ອນມືເລີຍ ບໍ່ມີກິ່ນ ຮູບໂສມກໍທຳມະດາໆ ແລ້ວດອກຫອນ ໄກ່ນີ້ເດ ? ສິນຊີ້ແທ້ໆ ເປັນດອກໄມ້ໄຮ້ກີບ ບໍ່ມີຫຍັງ ປະດັບປະດາໃຫ້ຈັບງາມ ເປັນຕ່ອນເອ່ເລ່ຄືຫອນໄກ່ຕົ້ມ ເປື່ອຍໆ ມີຮອຍຢີກໆຫນ້ອຍຫນຶ່ງ ກໍຈັ່ງແມ່ນສິນຊີ້ມັນ, ເອົາລະໄດ້ຈົ່ງໃຈມາແລ້ວ ກໍຈະດົມເບິ່ງກ່ອນ. ບໍ່ມີກິ່ນຫອມ ກິ່ນຂີ້ອັນໃດເລີຍ ! ຈະເປັນດອກໄມ້ງາມໄດ້ແນວໃດ ? ຈະເອົາ ໄປເອ້ໄປແຕ່ງໃສ່ເດ ? ສິນປູກຫວ່ານໄວ້ກັບຫຍ້າພໍໃຫ້ເດີ່ນ ບ້ານມີສີສັນຂຶ້ນແດ່ເທົ່ານັ້ນລະ ມັນເປັນດອກໄມ້ປະດັບດິນ ໃຫ້ເດັກນ້ອຍເດັດໄປຕີກັນ ຄືສິນມຸດໃຫ້ເປັນໄກ່ພວມເຕັ້ນເຂົ້າ ຕີກັນນັ້ນແລ້ວ !

ແມ່ນດອກຫຍັງນໍ ? ມີຫລາຍສີ ທັງຂາວ ເຫລືອງ ແດງ ສະຫລັບສັບຊ້ອນກັນ, ຕົ້ນຕ່ຳໆ ຄົງຈະເດັດງ່າຍ ຂ້ອຍ ງວາກຊ້າຍຂວາ ເຫັນວ່າພຸ່ມດອກໄມ້ຕິດກັບຈຳພວກພືດໃບ ປະດັບພຸ້ມ ມີສີສັນ ສະຫວາດຕາບໍ່ໜ້ອຍ ຈຶ່ງເບີດໜ້າໜີຈາກ ດອກຫອນໄກ່ກັບສາມປີ. ຂອງມັນແນ່ນອນຢູ່ແລ້ວວ່າ ເຖິງບໍ່ມີດອກໄມ້ແນວອື່ນອີກ ຂ້ອຍກໍຈະບໍ່ມາງົມເລືອກເດັດ ດອກຫອນໄກ່ເລີຍ.

ແມ່ນດອກບານຊື່ນນັ້ນເອງ ທີ່ປະດັບແຈສວນເບື້ອງນີ້ ໃຫ້ມີສີສັນ ມີຊີວິດຊີວາສົມຊື່ມັນຢູ່ດອກ ຫລຽວເບິ່ງກໍຊື່ນຕາແທ້ໆ ຍ້ອນສີສົດໃສຫລາຍຫລາກຂອງມັນ, ດອກບານຊື່ນມີກົບ ອ່າວບາງແຕ່ສູ້ທົນແດດຝົນດີ ຕັດໄປໃສ່ແຈກັນເອົາກຸ່ມຫລາຍ ມື້ ກົບຂອງມັນຢາຍອ່ອນເກສອນອາວບູນໆ ຊະນິດຫລາຍ ຊັ້ນງາມໜ້າຮັກຢູ່ ແຕ່ມັນເປັນດອກໄມ້ໄຮ້ກິ່ນ ! ຂ້ອຍມັກດອກ ໄມ້ມີກິ່ນຫອມເປັນຕົ້ນຕໍຢູ່ແລ້ວ ຈຶ່ງເຫັນວ່າດອກບານຊື່ນເໝາະ ແຕ່ຈະບານຢູ່ເທິງໜ້າດິນ ຫລື ປັກແຈກັນໃນມື້ວັນທຳມະດາ. ແຕ່ໃຜ ຈະເອົາບານຊື່ນຂຶ້ນໂຕະໃນວັນບຸນ ແລະ ນຳໄປເຮັດ

ຊຶ່ດອກໄມ້ຕ້ອນຮັບແຂກຄືນລະ ? ຂ້ອຍກົ້ມແຍງ ມັນອີກຄັກໆ. ດອກບໍ່ນ້ອຍບໍ່ໃຫຍ່ ນິ່ມສະເໝີ, ກີບກະຮ່າງກະຮິ່ງ, ສີສົດໃສ ເບິ່ງໄປມາຄ້າຍດອກໄມ້ ຢາງ ! ໂອ້ຍ ດອກໄມ້ຢາງ ! ຂ້ອຍ ຊັງດອກໄມ້ຢາງທີ່ໜຶ່ງ ຄິດບໍ່ອອກວ່າເປັນຫຍັງຈຶ່ງມີຜະລິດ ຕະພັນແນວນີ້ເກີດຂຶ້ນ? ແລ້ວດອກໄມ້ແທ້ໆ ຊ້ຳຜັດໄປຄື ດອກໄມ້ຢາງແນວນີ້ ຂ້ອຍບໍ່ຄິດວ່າຊິເລືອກດອກເດ້!

ໄວເທົ່າກັບຄວາມຄິດ ຂ້ອຍຟິດໜ້າໜີຈາກພຸ່ມ ດອກບານຊື່ນ ດ້ວຍຄວາມຮູ້ສຶກແຄ້ນເຄືອງ. ຢູ່ພຸ່ມນີ້ ດອກໄມ້ສີແດງ ສົດໃສບາດຕາຢູ່ຫລາຍກໍ ແມ່ນດອກຫຍັງນໍ ? ຊູກ້ານສະຫງ່າໜ້າເກງຂາມ ຢູ່ຕິດໆກັບແຄມຮົ້ວ. ແມ່ຕູ້ກໍ ຊ່າງຊອກຫາແນວມາປູກໄດ້ຫລວງຫລາຍແທ້ໆ ຂ້ອຍຮູ້ສຶກສົນໃຈ ດອກໄມ້ປະເພດນີ້ ເພາະບໍ່ປາກົດວ່າເຫັນຢູ່ໃສມາກ່ອນ ຂ້ອຍຟ້າວລີ່ວໄປໃສ່ມັນ ໂອ້ ດອກບົວບົກນັ້ນເອງ ! ດອກ ບານໄຂເປັນກີບຕິດຊ້ອນກັນ ຊົງຮູບບັ້ງເຫວີ ເສັ້ນເກສອນ ຍາວໆ ປາຍປຸ້ມ ຈັບລະອອງສີເຫລືອງພົ້ນອອກມາ. ເປັນດອກ ໄມ້ທີ່ມີຮູບຊົງປະຫລາດແນວໜຶ່ງ ໃບຍາວແລບຄ້າຍໃບເຕີຍ.

ບໍ່ເຂົ້າໃຈວ່າ ເປັນຫຍັງເພິ່ນຈຶ່ງເອີ້ນມັນວ່າ ບົວບົກ ບໍ່ວ່າຮູບດອກ ຫລືຮູບໃບ ມັນບໍ່ມີຫຍັງ ຄ້າຍຄືກັນກັບດອກບົວນ້ຳປະເພດໃດເລີຍ. ຂອຍກົ້ມລົງກອງດອກມາດົມ ມັນເປັນດອກໄມໄຮ້ກິ່ນຫອມ ອັນເປັນດັ່ງອາພອນປະດັບກາຍຂອງມວນມາລາ ດອກໄມ້ ບໍ່ຫອມ ມີຄາຄວນເດັດດົມບໍ່ ? ຢ່າລະ ດອກບົວບົກສີແສດ ສົດໃສງາມສະດຸດຕາ ເວລາເບິ່ງມາແຕ່ໄກ ແຕເມື່ອ ພິຈາລະນາໃກ້ໆແລ້ວ ມັນກໍຕົກອັບດັບໂດຍບໍ່ທັນມີໂອກາດ ກ້າວຂຶ້ນສູເວທີແຂງຂັນຊ້ຳ !

ຂອຍຫັນໃຈຍາວ ເມື່ອຕັດສິນໃຈບໍ່ເລືອກເອົາດອກບົວ ບົກ ... ຄວາມນຶກຄິດຫວນຫາອິນທະຫວາ ທີ່ມີກິ່ນຫອມອົບ ອວນ, ໃຈຍັງບໍ່ມ່ວນອອນຊອນ ເພາະຍັງຖະຫວິນເຖິງກິ່ນ ອັນລະມຸນລະໄມຂອງຈຳປາ ສີຂາວສະອາດຕາ ຂອງດອກພຸດ ຢ່າລະ ! ແນມໄປທາງຫນາ, ສວນດອກໄມ້ປ່ຽນຮູບໂສມມາ ເປັນພຶດພຸ່ມປູກໃສແຂງດິນ. ໂອະ ພຸ່ມນີ້ກຸຫລາບ ! ໂອ ... ກຸຫລາບ ຖາຈະປ່ຽນໃສ່ຫມູ່ແລ້ວ ກຸຫລາບຄວນໄດ້ຊື່ວ່າ ລາຊີນີແຫ່ງມວນບຸບຜາບໍ່ແມ່ນຫວະ ? ຂອຍຍິ້ມຢ່າງ

ເບີກບານຕໍ່ຄວາມຄິດຂອງຕົນ. ຍັງມີດອກໄມ້ໃຫ້ເລືອກອີກຕັ້ງຫລາຍແນວ, ພຸ້ນດອກເຢເບີຣາ, ກີບອ່ອນນຸ່ມຍາວແລບຊ້ອນກັນ ຫລາຍຊັ້ນ ເປັນລະບຽບຮຽບຮ້ອຍ ສີສັນຫລາກຫລາຍມັນບໍ່ຫອມ ແຕ່ຫາກຫົນຫາບດິນຟ້າອາກາດ ສີງາມສົດໃສ, ເປັນດອກໄມ້ທີ່ພວມນິຍົມປູກຫລາຍ. ເອົາຂຶ້ນເອ້ໂຕະແລ້ວໃຫ້ວ່າບໍ່ຕ້ອງໃສ່ດອກອື່ນ ແຕ່ຊິເອີ້ນວ່າມັນງາມເລີດແລ້ວເບາະ ? ບໍ່ດອກ ກຸຫລາບມີສະເໜ່ກວ່າ ກີບຊ້ອນຊ້ອນກັນບໍ່ຕ່າງຫຍັງກັບຝີມືມະນຸດຄ່ອຍບັນຈົງ ເອົາກາວຕິດຊ້ອນເຂົ້າກັນ. ເມື່ອຄິດເຫັນພາບກຸຫລາບ ພວມຈະບານເຜີຍກີບແລ້ວຂ້ອຍກໍຍິ້ມດ້ວຍອາລົມຫວານໆ ລຸກຍ່າງໜີຈາກກໍບົວບົກກາຍແອ່ງປູກຕົ້ນ ເຢເບີຣາ ສອງສາມແອ່ງ ທີ່ມີດອກປະດັບຫ່າງຕາ, ຂ້ອຍມຸ່ງໜ້າໃສ່ແອ່ງດອກກຸຫລາບທີ່ຢູ່ຖັດໄປ ເຊິ່ງມີຢູ່ນໍາກັນສາມແອ່ງ. ກຸຫລາບກໍໜຶ່ງໃບງາມດົກໜາຂຽວຊື່ນຕາ ພວມອອກດອກຈໍ່ຈູມ. ເບິ່ງຮອດບໍ່ທັນຮູ້ວ່າຈະເປັນສີຫຍັງ. ດອກຈູມຂອງມັນໃຫຍ່ເທົ່າໆໂປ້ມື ສະແດງວ່າຄົງແມ່ນແນວ ກຸຫລາບໃຫຍ່ ກີບໜາ, ຖ້າບານອອກຄືຈະງາມ.

ແຕ່ຕອນນີ້ຍັງແນມບໍ່ເຫັນຄວາມງາມໃດໆ. ຂ້ອຍກ້າວຕໍ່ໄປຂ້າງໜ້າ ກໍທີ່ຢູ່ຖັດມາເປັນກໍກຸຫລາບ ມີດອກສີເຫລືອງສົດໃສ ບຸ່ມບອນຫວານຕາ ບານປະດັບຢູ່ຕັ້ງສາມດອກ ໂອ ! ກຸຫລາບ ! ຂ້ອຍກົ້ມລົງດົມດອກໃຫ້ຊື່ນໃຈໜ້ອຍດຽວເທົ່ານັ້ນ ! ແຕ່ພໍມືຂ້ອຍແຕະຕ້ອງຖືກງ່າ ການກີບຂອງມັນຂຸຫລົ່ນອອກສອງສາມກີບໂລດ ! ຮື ກຸຫລາບເຖົ້າ ເມື່ອກີບຫລົ່ນອອກຮອດສອງສາມກີບແລ້ວ ແນ່ນອນວ່າຄວາມງາມສົມບູນເຕັມສ່ວນຂອງມັນກໍຍ່ອມຫລຸດລົງນຳ. ຂ້ອຍເສຍດາຍແສນເສຍດາຍ, ກ່ອນໜ້ານີ້ 2-3 ມື້ ກຸຫລາບຊໍ່ນີ້ຄົງພວມໜ້າແຍງ ໜ້າຖະໜອມ ແລະ ງາມກວ່າໝູ່ ! ແສງຕາກວາດແນມຕໍ່ໄປ ຍັງມີອີກກໍໜຶ່ງ ເປັນກຸຫລາບແດງສົດສີປາດຕາ, ມີດອກດຽວບານເດັ່ນເປັນສະຫງ່າຢູ່ທ່າມກາງສີຂຽວສະຫວາງຂອງພຸ່ມໃບ. ກຸຫລາບແດງກີບໃຫຍ່ໜາອ່ອນນຸ່ມມື ຂ້ອຍແນມເບິ່ງດ້ວຍຄວາມຮູ້ສຶກຊື່ນຊົມ. ນີ້ແລ້ວ ! ດອກທີ່ງາມກວ່າໝູ່ ແມ່ນກຸຫລາບທີ່ພວມບານ ສີສົດຊື່ນດອກນີ້ເອງ ! ຂ້ອຍກົ້ມລົງຫວັງຈະສູດດົມເອົາກິ່ນຫອມ ອ່ອນໆຂອງກຸຫລາບ

ໂອຍ ! ຟ້າເອີຍ ຕົກໃຈໝົດ ! ແມ່ນຕົວອີ່ຫຍັງດີ້ນແດ່ວໆຢູ່ທັ້ນ ກີບຊ້ອນໃບ ຕົດເກສອນຂາດແຫວ່ງໄປເຄິ່ງໜຶ່ງແລ້ວ ເສຍດາຍເດ້ ! ເປັນຫຍັງກຸຫລາບງາມໆ ຈຶ່ງມີບົ້ງຊອນໄຊຢູ່ ! ຂ້ອຍຖືກມືອອກຈາກກິ່ງກ້ານ ທັນໃດກໍຮູ້ສຶກເຈັບປ໊າບຢູ່ປາຍນີ້ວຊີ້ ! ເວນເອີ້ຍ ໜາມແຫລມກຸຫລາບປັກເຂົ້າຢ່າງລັກແລ້ວ ຂ້ອຍຈຸປາກດ້ວຍຄວາມຊິນເຄີຍ ເມື່ອຮູ້ສຶກເຈັບ, ຟ້າວເອົາປາຍນີ້ວຂຶ້ນມາບີບໃຫ້ເລືອດຍິ້ມອອກ ຮູ້ສຶກເສຍໃຈແລະປ່ຽນແປງແນວຄວາມຄິດໃນທັນທີ. ບໍ່ດອກກຸຫລາບດອກນີ້ບໍ່ແມ່ນ ດອກງາມສົມບູນກວ່າໝູ່ເລີຍ !

ເງີຍໜ້າໜີຈາກແຂ່ງກຸຫລາບ ດ້ວຍຄວາມຮູ້ສຶກອາວອນອາໄລກວ່າໝູ່, ໃນຈິດສຳນຶກຂອງຂ້ອຍ ແມ່ນພາບກຸຫລາບສີຂາວນວນສົດໃສ ມີນ້ຳໝອກເກາະຕິດສອງສາມຢອດນັ້ນ ຄືວ່າວິດງາມບໍລິສຸດ ຫາສິ່ງໃດປຽບບໍ່ໄດ້. ແຕ່ຕໍ່ໜ້າຂ້ອຍ ຊ້ຳແມ່ນກຸຫລາບເຖົ້າກີບຊຸຫລົ່ນ, ແມ່ນກຸຫລາບພອນຈໍ່ຈູມ ບໍ່ທັນອວດອ້າງສີສັນ, ແມ່ນກຸຫລາບທີ່ມີບົ້ງໜອນຊອນໄຊ.

ຂ້ອຍກ້າວໄປຂ້າງໜ້າອີກສອງສາມບາດ ແສງຕາແນມກວາດໄປຂ້າງໜ້າ. ຕາຍແລ້ວ ຂ້ອຍຜ່ານພຸ່ມກໍດອກໄມ້ມາໝົດສວນແລ້ວ. ບັດນີ້ຍັງແຕ່ພວກພືດໃບສີຈຳພວກບອນລາຍ ຫວ້ານ ຕ່າງໆ ທີ່ມີຮູບແປກປະຫລາດໄຮ້ເຊິ່ງກິ່ນຫອມທັງມວນ. ແນ່ນອນພືດພວກນີ້ ບໍ່ຄູ່ຄວນກັບການເດັດເລີຍ, ມັນງາມເມື່ອຢູ່ເປັນພຸ່ມ ເປັນພົ້ວໃບແຂ່ງກະຖາງດິນຊື່ງ ... ແຕ່ຈະເດັດເອົາບອນລາຍ ດ້ານກິ່ງດ້ານໃບໄປປະດັບນັ້ນ ແມ່ນການທຳລາຍມັນໂດຍກົງຊ້ຳ. ຊັ້ນຂ້ອຍຈະເລືອກເອົາດອກໃດ ? ງວາກຄືນຫລັງ ! ສວນດອກໄມ້ກ້ອງແສງແດດຍາມໃກ້ທ່ຽງ ຄືວ່າເສົ້າສີກົບແຫ່ວລົງ. ຂ້ອຍຍົກໂມງ ຢູ່ແຂນຂຶ້ນເບິ່ງ. ຕ໊າຍ ! ສິບສອງໂມງຍັງ 15 ນາທີແລ້ວ ຂ້ອຍໃຊ້ເວລາຊົມເລືອກດອກໄມ້ເປັນຊົ່ວໂມງແລ້ວ ຍັງບໍ່ໄດ້ດອກຖືກໃຈເລີຍ ! ແລ້ວຂ້ອຍຊິເດັດດອກໃດໄປໃຫ້ເອື້ອຍວັນລະ ? ຕາມກົດເກນຕົກລົງກັນນັ້ນ ຂ້ອຍຕ້ອງເລືອກເອົາດອກໄມ້ດອກໜຶ່ງ ! ຂ້ອຍກວາດແສງຕາຄືນຫລັງ ດ້ວຍຄວາມເສຍດາຍ. ແນມເບິ່ງຈຳປາທີ່ບານ



ເດຍລະດາດວາດຊົງອວດອົ່ງ ເພາະຢູ່ສູງເໜືອໝູ່, ຕົ້ນດອກຄູນຫວ່າງເປົ່າ ເພາະບໍ່ແມ່ນລະດູຂອງມັນ. ໂອ, ພຸ່ມຍັງມີຕົ້ນຝາງແດງນ້ອຍຢູ່ຕິດປະຕູເອົ້າ ບ້ານ ! ດອກແດງແກມແສດ ເປັນພຸ່ມພວງໜ້າຮັກ, ຜູ້ເຖົ້າມັກໃຊ້ໄປເພາະບຸນ, ຂ້ອຍລືວໄປຫາ ລັ່ງເລແນມເບິ່ງຮູບໂສມຂອງດອກຝາງແດງ. ເສຍໃຈ ! ເຫລືອໃຈ ! ດອກຝາງແດງ ! ກີບນ້ອຍ ອ່ອນ, ຢາຍກັນຢູ່ແບບໄຮ້ສີລະປະໃດໆ ເປັນດອກໄມ້ໄຮ້ກິ່ນຢ່າງໜຶ່ງ, ຖ້າເດັດອອກຈາກຕົ້ນກໍມີຫວັງ ແຫ່ວຕາບຊາບໂລດ. ແຕ່ຈະເຮັດແນວໃດໄດ້, ບໍ່ມີດອກອື່ນໃຫ້ເລືອກແລ້ວເດ້ ! ແດດຍິ່ງຮ້ອນ ຂ້ອຍຮູ້ສຶກເມື່ອຍອິບ ຫິວຫິວນໍ້າ, ດອກຝາງແດງຕໍ່ໜ້າໄຫວຕິງຄ່ອຍໆ ຍ້ອນແຮງລົມ, ເບິ່ງເປັນຊໍ່ເປັນພວງມັນກໍບໍ່ຂີ້ຮ້າຍດອກ, ຈໍາເປັນເອົາດອກຝາງແດງຕົ້ນນີ້ລະ !

ເອື້ອຍວັນເຮັດໜ້າຈະຍິ້ມກໍບໍ່ແມ່ນ ຈະໄຫ້ກໍບໍ່ເຊີງ ເມື່ອເຫັນຂ້ອຍຖືງ່າດອກຝາງແດງຂຶ້ນມາ ສີໜ້າຂອງຂ້ອຍເອງກໍຄືງບໍ່ຕ່າງຫຍັງກັບລາວປານໃດ.

- ນີ້ຫວະ ດອກໄມ້ງາມທີ່ສຸດຂອງນ້ອງ ? ລາວອຸທານ ທ້ວງ ເຊິ່ງກໍແມ່ນສິ່ງທີ່ຂ້ອຍຄາດຄິດໄວ້ແລ້ວ. ເຖິງປານນັ້ນ ຂ້ອຍກໍຍັງຫາຄຳຕອບລາວໄດ້ ຄືຕີເຮັດບໍ່ເຂົ້າໃຈເອົາ.

- ມັນບໍ່ງາມຖືກໃຈເອື້ອຍຫວະຊັ້ນ ? ພາໂລຖາມ ຄືນໄປຊັ້ນແລ້ວ.

ເອື້ອຍວັນຍິ້ມ, ຍິ້ມແລ້ວກໍຫົວຂຶ້ນແຮງໆ ... ເຮັດ ໃຫ້ຂ້ອຍຕິດແສດຫົວຂຶ້ນນຳ, ສອງເອື້ອຍນ້ອງພວກເຮົາ ຫົວນຳກັນຈົນເມື່ອຍ.

- ເລືອກໄປເລືອກມາ ອັນໃດກໍຄືວ່າບໍ່ຄັກ, ດອກສຸດ ທ້າຍເລີຍງາມກວ່າໝູ່ເນາະ ! ເອື້ອຍວັນສະຫລຸບແລ້ວຈູງ ແຂນຂ້ອຍເຂົ້າໄປໃນຫ້ອງນອນຄືນ, ຈັດແຈງຮັບເອົາ ດອກຝາງແດງຈາກມືຂ້ອຍ ໄປໃສ່ເຕົ້າແກ້ວສີຟ້າໃສໆ ຮູບ ຮຽວຈ່ອຍສູງໆ ປາກເຫວີອອກ, ເອົານ້ຳໃສ່ແລ້ວມານັ່ງເທິງ ຕຽງຮຽງກັບຂ້ອຍ.

- ກໍງາມຢູ່ໄດ໋ ນໍ້ແກ້ວ ! ເບິ່ງດີໆຕີເອື້ອຍວ່າ ມັນ ກໍບໍ່ຂີ້ຮ້າຍເດ, ນ້ອງເບິ່ງແມ້ !

ຂ້ອຍແນມເບິ່ງແຈກັນ ກັບດອກຟາງແດງ ທັນໃດກໍ ເຂົ້າໃຈໃນປັດຊະຍາຊີວິດຂອງເອື້ອຍວັນ. ຂ້ອຍຈຶ່ງງຶກ ຫົວຍິ້ມ.

- ງານດີຢູ່ໄດ້ເນາະເອື້ອຍວັນ ຖ້າເຮົາຮູ້ຈັກນໍາໃຊ້ ມັນກະດາຍ !

*- ພິມຄັ້ງທໍາອິດ : 1988*

*" ເພື່ອເຈົ້າ " ສະໂມສອນນັກຂຽນໜຸ່ມ*

*- ພິມຄັ້ງທີ 2 : 1989*

*ວັນນະສິນ*

# ແກ້ວງາມ

* ເພິ່ນວ່າ ຮົງໆເຫລື້ອມ    ມະນີໂຊໃສສ່ອງ ກໍດາຍແລ້ວ
ຄັນວົງແຫວນບໍ່ມາຮອງຮັບໄວ້    ດວງແກ້ວຫ່ອນຊິງາມ

* ປຸນປຽບດ້ານ    ຄືຄູ່ຜົວເມຍ ນີ້ແລ້ວ
ຄັນບໍ່ສົມສະເຫມີກັນ    ຫ່ອນຊິຍືນຍາວຍັ້ງ
ຄັນວ່າ ຜົວບໍ່ຍິນດີຊວ້ານ    ຊູຊອນກ້າວຍ່າງ
ຄົງຈັກເຫີນຫ່າງຂ້າງ    ຫລັງຫລ້າຫລ່າສະໄຫມ

* ແປວໄຟ ບໍ່ຫ່ອນລາມລຸກໄຫມ້    ຄັນຝອຍບໍ່ອອຍເຕີມຕື່ມ
ຄັນວ່າ ເມຍຫາກບໍ່ມີຄວາມຄິດ    ຜົດທະນາຕືນຂຶ້ນ

ຄອງແຕ່ຄຸນຜົວຍູ້ ຍໍຍົງບໍ່ລືງຄ່າ ໄດ້ແລ້ວ
ຄວນທີ່ ນາງນາດຫລ້າ ທັນທ້າວກວ່າຫລັງ

* ຊອກຮ່ຳຮູ້ ຮຽນຢູ່ເລີງໆ ຊອບແລ້ວ
ບຳລຸງ ທັງພາສາ ວິທະຍາການພ້ອມ
ການເມືອງໄດ້ ຍຸດໂທບາຍ ໃນນອກ
ແນວທາງພັກ ແລະ ລັດວ່າໄວ້ ກຳແຫນັບແມ່ນມື

* ຮູ້ຈັກ ປະກອບສ້າງ ຖະແຫລງວາດວາຈາ
ຍາມເມື່ອໂຮມຊຸມນຸມ ບໍ່ຈົ່ງຈຽມອາຍອ້ຳ
ຮູ້ຈັກສວຍຊິນໃຊ້ ສິດສະເຫມີທຽມເທົ່າ ຊາຍແລ້ວ
ຮູ້ຮັກສາກຽດໃຫ້ ລືລ້ຳໂລກເຊີງ.

*- ພິມຄັ້ງທຳອິດ 1987*

*ວັນນະສິນ*

# ເນື້ອແມ່ເຈົ້າຄຸກ

ແມ່ເກີດປີ ຄ.ສ. 1919 ຄືຫລັງຈາກສົງຄາມໂລກຄັ້ງທີ 1 ສັຽງສຸດລົງໃຫມ່ໆ ແມ່ເປັນ ລູກຊອດຝະລັ່ງ.

ບ່າວຝະລັ່ງໄວ 19 ປີ ຊື່ວ່າ ຊິເຍ ລູກຊາຍເຈົ້າຂອງໂຮງງານອາຫານກະປ໋ອງຢູ່ຣານອຍ ເດີນທາງມາຢັຽມຢາມພໍ່ໃນຍາມພັກຮຽນ, ຊາຕາກໍາ ຫລື ສາຍແນນນໍາຈ່ອງພາໃຫ້ເພິ່ນມາພົບພໍ້ ສາວລາວຜູ້ຊື່ວ່າ ນາງພັນ (ແມ່ຖ້ໍາຂອງຜູ້ຂຽນ) ບ້ານໜອງປ່າໄນ ເມືອງສີໂຄດຕະບອງ ນະຄອນວຽງຈັນ ແລະ

ແຕ່ງດອງເອົາກັບຕາມຮີດຄອງລາວ ຈາກນັ້ນກໍເດີນທາງໄປຢູ່ຣ້ານອຍນຳກັນ ເພື່ອເບິ່ງແຍງກິດຈະການໂຮງງານຢູ່ພຸ້ນ. ແມ່ເຖົ້າ ໃຫ້ກຳເນີດລູກຊາຍກົກຂອງເພິ່ນ ຢູ່ຣ້ານອຍ, ແຕ່ລູກຜູ້ນີ້ອາຍຸໄດ້ພຽງ 9 ເດືອນ ກໍເສຍຊີວິດ. ເມື່ອແມ່ເຖົ້າຕັ້ງທ້ອງລູກຜູ້ທີສອງ, ແມ່ເຖົ້າທວດ ( ນາງເລັກ) ຂໍໃຫ້ແມ່ເຖົ້າມາກຳລູກຢູ່ວຽງຈັນ ຖ້ານກາງການດູແລເອົາໃຈໃສ່ຂອງຍາດພີ່ນ້ອງບ້ານໜອງປາໄນ. ເທື່ອນີ້ແມ່ເຖົ້າໄດ້ລູກສາວ ແລະ ຕັ້ງຊື່ວ່າ ນາງມາຣີ ຫລື ມາລີ ຄືແມ່ນີ້ເອງ.

ເມື່ອມາລີອາຍຸໄດ້ປີປາຍ ພໍ່ຝະລັ່ງກໍຈາກໄປ ເພື່ອດູແລໂຮງງານຢູ່ ຣ້ານອຍ ຕາມໜ້າທີ່ ທີ່ພໍ່ເພິ່ນມອບໃຫ້, ບັນຫາເກີດຂຶ້ນວ່າ ແມ່ເຖົ້າທວດ (ນາງເລັກ) ບໍ່ຍິນຍອມໃຫ້ລູກສາວເພິ່ນ (ຄືແມ່ເຖົ້າ ຂອງຜູ້ຂຽນ) ເອົາຫລານນ້ອຍໆ ອາຍຸພຽງປີກວ່ານີ້ ເດີນທາງໃສ່ຫລັງມ້າຫລັງຊ້າງ ໄປນຳ, ເພິ່ນຂໍໃຫ້ລູກເຂີຍຝະລັ່ງ ໄປລົບດຽວກ່ອນ ເມື່ອມາລີໃຫຍ່ກວ່ານີ້ ຈຶ່ງມາຮັບເອົາ. ແຕ່ການເດີນທາງອັນລຳບາກຍືດເຍື້ອ

ແລະ ສ່ຽງໄພ ຄົງເປັນອຸປະສັກບໍ່ໜ້ອຍຕໍ່ການຕິດຕໍ່ສື່ງຂ່າວຫາກັນ ຈຶ່ງກາຍເປັນວ່າ ພໍ່ເຖົ້າໄປແລ້ວກໍໄປເລີຍ ບໍ່ກັບມາອີກ. ປີທໍາອິດເພິ່ນສົ່ງຂ່າວ ພ້ອມເງິນມາໃຫ້ ເປັນຄ່າລ້ຽງດູລູກສາວນ້ອຍ ທີ່ຢູ່ກັບເມຍ ແລະ ແມ່ເຖົ້າ, ຮອດປີທີ 3 ແມ່ເຖົ້າໄດ້ຂ່າວວ່າ ພໍ່ເຖົ້າ ເອົາເມຍສາວຫວຽດນາມແລ້ວ.

ແມ່ເອງບໍ່ທັນຈື່ຮອດໜ້າພໍ່ຂອງຕົນຊໍ້າ, ອາຍຸບໍ່ທັນເຖິງສອງປີ ແມ່ກໍເປັນລູກກໍາພ້າພໍ່ແລ້ວ! ມາຣີ ຫລື ມາລີ ນາງນ້ອຍລູກຊອດຝະລັ່ງ ຈຶ່ງເຕີບໃຫຍ່ຖ້າມກາງໄຮ່ນາຕາກ້າຂອງຄອບຄົວສັງຄົມລາວ ແວດລ້ອມດ້ວຍເຊື້ອສາຍພີ່ນ້ອງທີ່ເປັນຄົນລາວ ບໍ່ມີໂອກາດຮັບຮູ້ວ່າ ວັດທະນະທໍາ ຊີວິດການເປັນຢູ່ຂອງບຸກຄົນ ຊຶ່ງປະກອບເລືອດເນື້ອໃຫ້ແກ່ຕົນເປັນແນວໃດ.

ມາລີເປັນສາວນ້ອຍ ໜ້າຕາແປກຕ່າງໝູ່ໃນຄຸ້ມບ້ານ ຈົນເປັນທີ່ຮູ້ຈັກກັນທົ່ວໄປ ຫລາຍຄົນເວົ້າຢອກວ່າ

"ລູກຝະລັ່ງຂີ້ນົກ" "ສາວຫົວແດງ" "ອີ່ຫົວຫຍອງ" ທັງນີ້ເພາະນອກຈາກມີຜິວຂາວສົດໃສ ດັ່ງໂນແລ້ວ ແມ່ຍັງມີລັກສະນະອື່ນໆ ຂອງຄົນຢູລົບຫລາຍພໍສົມຄວນ.

ແມ່ເຖົ້າແຕ່ງດອງໃຫມ່ ຕອນແມ່ອາຍຸໄດ້ 5 ປີປາຍ, ເມື່ອແມ່ມີອາຍຸພໍເຂົ້າໂຮງຮຽນ ແມ່ເຖົ້າກໍມີລູກໃຫມ່ຕື່ມ ແມ່ຈຶ່ງບໍ່ມີໂອກາດໄດ້ຮຽນຫນັງສືເລີຍ. ຊີວິດຂອງແມ່ໃນໄວເດັກຄ້າຍຄືນະອະນິຍາຍ ໂສກເສົ້າທີ່ວໆໄປ, ມີເລື່ອງອິດສາບັງບຽດ ຕາມແບບສະບັບພໍ່ນ້າ ກັບລູກນ້າ ແລະເອື້ອຍນ້ອງ ທີ່ເກີດຮ່ວມທ້ອງ ແຕ່ຕ່າງພໍ່ກັນ.

ແມ່ເປັນສາວຍຸກຕົ້ນຂອງຊຸມປີ 30 ແລະ ແຕ່ງດອງຕອນມີອາຍຸ 15 ປີປາຍ ຂະນະທີ່ໄປຢູ່ນຳ ພີ່ນ້ອງເມືອງອຸດອນ (ປະເທດໄທ) ກັບຊາຍຫນຸ່ມທີ່ເປັນຄູສອນ ຢູ່ວິທະຍາໄລພະລະສຶກສາ. ໃຜໆກໍວ່າ ແມ່ໂຊກດີ ເພາະຄອບຄົວຝ່າຍຊາຍພຽບພ້ອມດ້ວຍຄຸນນະສົມບັດ ຊັບສົມບັດ ແລະ ກຽດຕິຍົດ.

ແຕ່ແມ່ກໍເປັນແມ່ຮ້າງ ເມື່ອອາຍຸໄດ້ 17 ປີເທົ່ານັ້ນ, ມີລູກຊາຍອາຍຸ 8 ເດືອນຕິດມານຳຄົນໜຶ່ງ. ສາເຫດການຢ່າຮ້າງຂອງແມ່ ສົມທີ່ຈະຖ່າຍທອດອອກເປັນນະວະນິຍາຍ ຊຶ່ງຈະເວົ້າເຖິງ ໜ້ອຍໜຶ່ງໃນຂັ້ນຕໍ່ໄປ.

ແມ່ແຕ່ງດອງໃໝ່ກັບພໍ່ (ສີລາ ວີຣະວົງ) ໃນປີ 1939 ແລະ ມີລູກນຳກັນ 14 ຄົນ, ຍິງ 7, ຊາຍ 7.

ລູກຂອງແມ່ເຕີບໃຫຍ່ ຮ່າງກາຍສົມບູນແຂງແຮງທຸກຄົນ, ອ້າຍກົກຊື່ ສົມຄິດ (ລູກພໍ່ເກົ່າ) ອາຍຸໄດ້ 26 ປີ ກໍເສຍຊີວິດ ໃນສະໜາມຣົບ ປີ 1962 ແມ່ເສຍໃຈຈົນຈະປ່ວງບ້າ, ຫລາຍຄົນວ່າ ແມ່ບໍ່ໜ້າຈະເສຍໃຈຫລາຍປານນັ້ນ ເພາະວ່າຍັງມີລູກຊາຍອີກຕັ້ງ 7 ຄົນ, ແຕ່ໃນໂລກນີ້ ຈະມີຫຍັງມາສາມາດຊັ່ງຕວງ ວັດແທກຄວາມຮັກຂອງແມ່ ທີ່ມີຕໍ່ລູກແຕ່ລະຄົນໄດ້, ມີລູກຜູ້ໃດທົດແທນລູກ ອີກຜູ້ໜຶ່ງໄດ້ ? ໃນຄວາມຮູ້ສຶກຂອງແມ່. ລູກທຸກຄົນເປັນຫົວໃຈ ເປັນອິນຊີໜຶ່ງທີ່ຮ່າງກາຍແມ່ ແຍກອອກມາ.

ລູກທຸກຄົນໄດ້ຮັບການສຶກສາ ມີຄວາມຮູ້ພໍສົມຄວນ, ແມ່ບໍ່ຈໍາແນກວ່າລູກສາວ ບໍ່ຕ້ອງຮຽນຫລາຍກໍໄດ້. ແມ່ຕັດສິນເອົາຕາມສະພາບຕົວຈິງ, ໃຜມັກຮຽນກໍຮຽນໄດ້ ແມ່ບໍ່ວ່າ ລູກຫລາຍຄົນ ສອບເສັງໄດ້ທຶນໄປຮຽນຕ່າງປະເທດ. ເວົ້າໄດ້ວ່າ ລູກໆຂອງແມ່ ໄດ້ປະກອບກິດຈະການທີ່ເປັນ ປະໂຫຍດຕໍ່ສັງຄົມ, ບາງຄົນເປັນນັກວິຊາການ ອາຈານສອນ ນັກຂຽນ ນັກກະວີ ທີ່ຝາກຮອຍ ປາກກາໄວ້ໃຫ້ຄົນຄິດຮອດ ອາໄລຫາ ແລະ ມີສ່ວນເສີມສ້າງສິລະປະວັນນະຄະດີລາວໃຫ້ມີບາດກ້າວ ຂະຫຍາຍໂຕ ແລະ ສືສັບ ຄູ່ຄຽງກັບ ຜືນແຜ່ນດິນເກີດ ຂອງຕົນ.

ທັງຫມົດນີ້ ແມ່ມີສ່ວນສໍາຄັນ ສົ່ງເສີມ ແລະ ໃຫ້ກໍາລັງໃຈ. ແມ່ທັງໃຫ້ແບບຢ່າງ ທັງໃຫ້ ຄໍາສອນທີ່ງ່າຍດາຍ ປະຕິບັດໄດ້. ໃຜກໍງຶດວ່າ ແມ່ລ້ຽງລູກຕັ້ງ 15 ຄົນ ລອດມັດຈຸລາດ ພະຍາດ ບາດເຍັບມາໄດ້ແນວໃດ. ເວລາມີລູກນ້ອຍ ແມ່ປະຕິບັດຫລັກການງ່າຍໆ ຄື ຈົ່ງຍອມຂອງກິນດີໆ ເທົ່າທີ່ມີຢູ່ໄວ້ໃຫ້ຜູ້ນ້ອຍກວ່າຫມູ່ ເຂົ້າຈ້າວໃຫມ່ທີ 1 ຕ້ອງມີໄວ້ຕົ້ມເອົານໍ້າ ຫລື ໂມ້ຕົ້ມ

ປະສົມ ນ້ຳຕານປ້ອນລູກມື້ລະ 2 ເທື່ອ, ລູກນ້ອຍທຸກຄົນຕ້ອງໄດ້ກິນເຂົ້າກ່ອນຜູ້ໃຫຍ່ສະເໝີ, ເວລາລູກປວດຫົວຕົວຮ້ອນ, ເຈັບທ້ອງ, ແມ່ໄປຫາຫມໍຫລວງ ແທນການເຢົາຢາ ຫລືໃຊ້ຢາພື້ນເມືອງ ຄືຄົນທັງຫລາຍຍັງນິຍົມປະຕິບັດໃນເວລານັ້ນ. ແມ່ບອກສະເໝີວ່າ ເດັກນ້ອຍເຈັບເປັນໄວອ່ອນແອ ຕ້ອງຟ້າວປິ່ນປົວໂລດ. ເວົ້າໄດ້ວ່າ ແມ່ມີຫົວຄິດທັນສະໄໝສົມຄວນໃນການລ້ຽງເດັກ ທັງໆທີ່ແມ່ ອອກລູກຢູ່ເຮືອນ ໂດຍການຊ່ອຍເຫລືອຂອງຫມໍຕຳແຍພື້ນເມືອງ. ແມ່ເອົາໃຈໃສ່ເລື່ອງຄວາມສະອາດທີ່ສຸດ, ທຸກເທື່ອທີ່ຈະອອກລູກ ແມ່ຕ້ອງລ້າງຫມໍ້ຕົ້ມນ້ຳທີ່ຈະໃຊ້ ແລະ ລວກໄມ້ຕັດສາຍແຮໄວ້ໃຫ້ຫມໍຕຳແຍດ້ວຍຕົນເອງ. ຜ້າອ້ອມແອນ້ອຍ ແມ່ກໍກຽມໄວ້, ບໍ່ຄະລຳວ່າລູກອາດຈະບໍ່ລອດ ຖ້າກຽມເຄື່ອງໄວ້ ແລະຕົນຕໍແມ່ບໍ່ຄະລຳອາຫານ ກິນທຸກຢ່າງທີ່ແຊບຖືກປາກ ຊຶ່ງເລື່ອງນີ້ລູກໆຂອງແມ່ ທຸກຄົນກໍຮັບເອົານິໄສນີ້ໄວ້ ຄືບໍ່ຄະລຳຕາມຮີດຄອງ ແຕ່ເລືອກກິນໃນສິ່ງທີ່ແຊບມົວຖືກປາກຫລາຍກວ່າ. ສິ່ງຫນຶ່ງທີ່ແມ່ຖ່າຍທອດໄວ້ໃຫ້ພວກລູກໆ ກໍຄື

ຄວາມເມດຕາອາທອນຕໍ່ເດັກນ້ອຍ ບໍ່ວ່າເດັກນ້ອຍນັ້ນ ຈະເປັນລູກໃຜຫລານໃຜ ແລະ ແມ່ຫ້າມເດັດຂາດ ບໍ່ໃຫ້ຕີເດັກນ້ອຍອາຍຸຕ່ຳກວ່າ 2 ປີ, ຕີໃນນີ້ ຮວມທັງການບິບ ຫລືບິດແກ້ມເດັກດ້ວຍຄວາມຄັນແຂ້ວເວລາຢອກລໍ້ເດັກ ຫລື ສະແດງອາລົມຮຸນແຮງຕໍ່ເດັກ ເຊັ່ນ ຈວາດໃຫ້ຕື່ນຫລືຮ້ອງ ເປັນຕົ້ນ. ແມ່ບອກສະເຫມີວ່າ ເດັກນ້ອຍອາຍຸສ່ຳນີ້ ບໍ່ຮັບຮູ້ການບັງຄັບບັນຊາຫຍັງເທື່ອ. ຄວາມເມດຕາຂອງແມ່ຕໍ່ເດັກນັ້ນເປັນທີ່ປະຈັກ ແລະ ຮູ້ກັນທົ່ວໄປ. ຫລາຍເທື່ອມີຄົນເອົາເດັກນ້ອຍທີ່ແມ່ປະຖິ້ມ ຫລື ເອົາມາຈ່າວຫາຜູ້ອຸປະການະ, ແມ່ເອງ ເຖິງວ່າມີລູກຄີງລ້ຽງດູຢູ່ເປັນ 5 ເປັນ 6 ແລ້ວກໍຍັງບໍ່ວາຍທີ່ຈະອາສາຮັບມາລ້ຽງ. ເພິ່ນບອກວ່າ ເດັກນ້ອຍດ້ານຄົນ ບໍ່ພາໃຫ້ທຸກຕື່ມຍ້ອນດອກ. ຫມາຍຄວາມວ່າ ສຳລັບຜູ້ທີ່ທຸກຢູ່ແລ້ວ ມີເດັກນ້ອຍມາຕື່ມອີກຜູ້ຫນຶ່ງ ກໍບໍ່ທຸກລົງກວ່າເກົ່າ. ລ້ຽງໄວ້ ແລະ ເມື່ອມັນໃຫຍ່ຂຶ້ນມາ ກໍອາດເປັນຄົນຮູ້ຜູ້ດີ ເພິ່ງອາໄສໄດ້. ເບິ່ງຄວາມຄິດຂອງແມ່ງ່າຍດາຍ ແລະ ຊື່ບໍລິສຸດໃຈ ໂດຍມີເຫດຜົນທຳມະດາໆວ່າ ທຸກຄົນ



ແມ່ກັບພໍ່, ເອື້ອຍດາຣາ ( ອຸ້ມ ), ອ້າຍຄິດ
ທີ່ ກຸງເທບ, ຄ.ສ. 1942 - ແມ່ຕ້ອງໃສ່ໝວກ ຕາມກົດລະບຽບ
ຂອງສະຫຍາມສະໄໝນັ້ນ

ໃຫຍ່ຂຶ້ນມາຕ້ອງສາມາດລ້ຽງກຸ້ມຕົນເອງທັງນັ້ນ ແມ່ຄົງໝາຍຄວາມວ່າ ຖ້າເອົາໄດ້ຮັບການ ລ້ຽງດູຢ່າງຖືກຕ້ອງ ຊຶ່ງຄວາມຄິດນີ້ ຫລາຍຄົນອາດບໍ່ເຫັນພ້ອມ ແຕ່ນີ້ກໍເປັນທັດສະນະສ່ວນຕົວຂອງແມ່ ເມື່ອສະໄຫມນັ້ນ. ສະພາບໃນປັດຈຸບັນປ່ຽນໄປ ແລະທັດສະນະນີ້ກໍອາດບໍ່ສອດຄ່ອງແລ້ວ ແຕ່ສິ່ງທີ່ພວກເຮົາໄດ້ຮັບສືບຕໍ່ມາຈາກແມ່ ກໍຄືຄວາມເອື້ອອາທອນຕໍ່ເພື່ອນມະນຸດຄວາມກະລຸນາ ເມດຕາຕໍ່ເດັກທົ່ວໆໄປ.

ວິລະກຳ ຫລືເລື່ອງກ່ຽວກັບຄວາມເດັດດ່ຽວຂອງແມ່ມີຫລາຍ ຈົນລູກຄິດວ່າ ຖ້າລູກທັງ 14 ຄົນ ທີ່ຍັງຢູ່ນີ້ຊ່ອຍກັນເກັບກຳລາຍລະອຽດ ແລະ ຂຽນອອກມາ ມັນຄົງຈະເປັນປື້ມທີ່ໜ້າອ່ານຫລາຍທີ່ວ.

ຊີວິດຂອງແມ່ ຜ່ານຜ່າມໍລະສຸມໜັກໜ່ວງ ອັນເນື່ອງມາຈາກຊີວິດການເມືອງຂອງພໍ່ ລະຫວ່າງປີ 1939-48. ຫລາຍເທື່ອຫລາຍທີ ຊີວິດ ແລະ ຄວາມປອດໄພຂອງພໍ່

ຂຶ້ນຢູ່ກັບພິກໄຫວ ປັນຍາຂອງແມ່ ຜູ້ຊຶ່ງບໍ່ໄດ້ເຂົ້າໂຮງຮຽນເລີຍຕະຫລອດຊີວິດ.

ເຫດການບ້ານເມືອງ ຫລໍ່ຫລອມໃຫ້ແມ່ກ້າຫານຕັດສິນບັນຫາຕ່າງໆ. ຄວາມຮັກອັນບໍລິສຸດ ຕໍ່ລູກຜົວ ເຮັດໃຫ້ແມ່ໄດ້ຮັບຄວາມເມດຕາອາຫອນຈາກຄົນອື່ນ, ດັ່ງເລື່ອງລາວທີ່ເກີດຂຶ້ນກັບແມ່ ໃນປີ 1940.

ຕົ້ນເດືອນທັນວາ ປີ 1940 ລົມໜາວພັດວີ່ວອນຢູ່ຕະຫລອດມື້, ປະຊາຊົນຊາວວຽງຈັນ ສ່ວນໜຶ່ງອົບພະຍົບອອກຈາກເມືອງ, ມີຂ່າວລືກັນວ່າ ສະຫຍາມກັບຝະລັ່ງຈະຮົບກັນໂດຍການ ໂຈມຕີກັນທາງອາກາດ, ຕອນນັ້ນເປັນເວລາກ່ຽວເຂົ້າ ຊາວບ້ານຈຶ່ງອອກໄປນອນເຝົ້າລານເຂົ້າຕາມແຄມນາ. ເປັນທີ່ຮູ້ກັນວ່າ ມະຫາສີລາໄດ້ເຄື່ອນໄຫວຮ່ວມກັບຂະບວນກູ້ຊາດ ທຳການຕໍ່ຕ້ານຝະລັ່ງ ດ້ວຍຄວາມຫວັງທີ່ຢາກໃຫ້ລາວເປັນເອກະລາດ, ໂດຍເຫັນວ່າເປັນໂອກາດເໝາະສົມ ທີ່ຝະລັ່ງຕົກຢູ່ໃນທ່າອ່ອນເພຍ ເນື່ອງຈາກຖືກ

ເຢຍລະນັບບຸກໜັກ. ແຕ່ການເຄື່ອນໄຫວຂອງພໍ່ກໍບໍ່ຫລຶດຈາກສາຍຕາຂອງພວກນັກສືບສອດແນມຝະລັ່ງໄປໄດ້. ດັ່ງນັ້ນເພື່ອກໍາຈັດປັດເປົ່າສັຽນໜາມ, ຝະລັ່ງຈຶ່ງທໍາການຈັບກຸມບຸກຄົນຜູ້ຕ້ອງສົງໄສຈໍານວນໜຶ່ງ. ເນື່ອງຈາກວ່າພໍ່ເປັນຄົນມາຈາກເມືອງຮ້ອຍເອັດ ດິນແດນຝັ່ງຂວາແມ່ນ້ຳຂອງພໍ່ຈຶ່ງຖືກເບິ່ງວ່າເປັນຄົນໄທ ແລະ ການພິພາດລະຫວ່າງສະຫຍາມກັບຝະລັ່ງ ຈຶ່ງເປັນເຫດຜົນອັນດີໃຫ້ຝະລັ່ງອອກຕິດຕາມຈັບຄົນໄທ!

ຍາພໍ່ຕາແສງບຸນ (ຕາແສງສີຖານເໜືອ) ສະໄໝນັ້ນຮູ້ຈັກຮັກແພງກັບພໍ່ເປັນຢ່າງດີ (ເວລາ ພໍ່ສິກອອກຈາກວັດຍາພໍ່ຕາແສງເອງ ເປັນຜູ້ມາທໍາລາບາສີໃຫ້) ເມື່ອຮູ້ຂ່າວຈຶ່ງຟ້າວມາເລົ່າສູ່ຟັງ :

- ທ່ານມະຫາ, ພໍ່ໄດ້ຍິນເຂົາເວົ້າວ່າ ຈະຈັບຄົນໄທເຈົ້າບໍ່ຢ້ານບໍ ? ເຈົ້າກໍມາແຕ່ພຸ້ນ ແຕ່ຄືວ່ານັ້ນລະບໍ ເຈົ້າກໍມາຢູ່ດົນ ເປັນຄົນລາວໄປແລ້ວ!

(ທ່ານມະຫາ ແມ່ນສັບພະນາມ ທີ່ຄົນທົ່ວໆໄປນິຍົມເອີ້ນພໍ່ໃນສະໄຫມນັ້ນ) ຍາພໍ່ຕາແສງບຸນ ບອກຕື່ມວ່າ

"ເອົາເທາະ ບາດເຂົາມາ ພໍ່ຊິເວົ້າແຮງໆດອກ ໃຫ້ເຈົ້າຟ້າວຫລົບຫນີເດີ້!

ເມື່ອສະພາບການເປັນເຊັ່ນນີ້ ພໍ່ໄດ້ບອກໃຫ້ແມ່ເຖົ້າ (ນາງພັນ ຊຶ່ງແຕ່ງດອງໄຫມ່ ກັບຄົນຈັງຫວັດໄຊຍະພູມ) ຫລົບຫນີໄປກ່ອນ ແລ້ວຕົນເອງກໍພາຄອບຄົວອອກໄປນອນຢູ່ຕູບເຝືອງແຄມ ລານເຂົ້າ ບ້ານດົງນາໂຊກ. ເວລານັ້ນເອື້ອຍດາລາ (ລູກສາວກົກຂອງພໍ່ກັບແມ່ ຫລື ເອື້ອຍກົກຂອງຜູ້ຂຽນ ມີອາຍຸໄດ້ 6 ເດືອນປາຍ. ນອນຢູ່ໃກ້ໆລານເຂົ້າຫລາຍມື້ ເອື້ອຍດາລາຈຶ່ງເຈັບຕາ ຍ້ອນຂີ້ໄງ່ຈາກຄາຍເຂົ້າ.

ສະຖານະການເຄັ່ງຮ້ອນຂຶ້ນ ກາຍເປັນການປະທະກັນດ້ານກໍາລັງອາວຸດ ລະຫວ່າງສະຫຍາມ ແລະ ຝະລັ່ງ, ພໍ່ພາແມ່ ແລະ ລູກ ຍ້າຍອອກໄປໄກອີກ ຄືໄປປຸກຕູບເຝືອງຢູ່ແຄມລານເຂົ້າ

ບ້ານທົ່ງຫລັກຫີນ. ຕູບຢູ່ດ້ານເຫນືອສຸດຂອງລານເຂົ້າ. ຍ້ອນບ້ານເສິກເມືອງເສືອ ຊາວນາຈຶ່ງໂຮມກັນເຮັດລານເຂົ້າມາຕີບວດໂຮມກັນເປັນຫມູ່ໃຫຍ່ ແລະ ປຸກຕູບນອນຢັ່ງຢາຍກັນອ້ອມໆລານ ທີ່ກວ້າງກວມນາ 4-5 ໄຮ່ ແລະ ມີເຟືອງຫນາປູປົກຄຸມ ສູງເປັນໂນນພູນ້ອຍໆ.

ແລ້ວໃນຄືນຂອງວັນທີ 7 ເດືອນມັງກອນ ປີ 1941, ຂະນະທີ່ພໍ່ພວມນັ່ງສານຄາງແຫ ສຳລັບເອົາໄປຕົບເຈຍທີ່ມາກິນດອກງີ້ວຢູ່ຕີນດົງ ກັບຫລານຊາຍຊື່ ຊາລີ ອາຍຸ 20 ປີ ຢູ່, ຂະນະທີ່ແມ່ ກັບລູກຊາຍ (ອ້າຍຄິດ) ອາຍຸ 6 ປີ ແລະ ລູກສາວ (ເອື້ອຍດາລາ) ອາຍຸ 6 ເດືອນປາຍເຂົ້ານອນແລ້ວກໍໄດ້ຍິນສຽງຫມາເຫົ່າຟົດສະນັ່ນອື້ນ ຢູ່ຖຽງນາຫລັງເຫນືອຊຶ່ງເປັນຖຽງ ຂອງທິດປັ່ນ ຫລື ພໍ່ວັນ (ຊ່າງແຕ້ມເລື່ອງພະລັກພະລາມ ໃສ່ຝາພະຫນັງວັດອູບມຸງ) ມີສຽງລົມເວົ້າກັນແຮງໆ ຟັງພໍຈັບຂໍ້ຄວາມໄດ້. ທຳອິດແມ່ນສຽງຖາມຂອງທິດປັ່ນເຈົ້າຂອງຖຽງວ່າ :

- ມາຫຍັງກັບເກາະ ? ນິສຽງຕອບຈະແຈ້ງວ່າ :

- ມາຫາຈັບຄົນໄທ ໄດ້ຍິນວ່າມາຫລົບລີ້ຢູ່ແຖວໆນີ້.

ເມື່ອໄດ້ຍິນແນວນັ້ນ ພໍ່ໃຊ້ທ້າວຊາລີໄປຟັງເອົາຄວາມລັກກ່ອນ ທ້າວຊາລີ ແລ່ນລັດອ້ອມລານເຂົ້າ ໄປຮອດຖຽງທິດປັ່ນ ກໍເຫັນວ່າມີທະຫານຝະລັ່ງພາຍປືນຍາວ 3 ຄົນ ກັບນັກສືບລາວ 2 ຄົນ ນຳຫນ້າໂດຍ ຍາພໍ່ຕາແສງບຸນ. ທ້າວຊາລີ ຈອບຟັງຍາພໍ່ຕາແສງກັບທະຫານ, ເມື່ອຮູ້ລັກແນ່ວ່າແມ່ນຫຍັງ ເປັນຫຍັງແລ້ວ ຈຶ່ງແລ່ນຫອບມາຖຽງບອກໃຫ້ພໍ່ (ນ້າບ່າວ) ຮູ້, ແມ່ຊື່ງນອນຟັງເຫດການ ຈຶ່ງບອກໃຫ້ພໍ່ຫລົບຫນີກ່ອນທີ່ພວກຝະລັ່ງຈະມາຮອດ.

ຄາວດຽວ ສຽງຫມາກໍເຫົ່າມາທາງຕູບທີ່ແມ່ກັບລູກນອນຢູ່, ໂຄມໄຟສາຍຫລາຍດວງ ເຍິງໃສ່ຕູບຫລັງນ້ອຍຈົນແຈ້ງຮຸ່ງ ແນມເຫັນທົ່ວທຸກບ່ອນ.

- ແມ່ຄິດ ແມ່ຄິດ (ເອີ້ນຕາມຊື່ລູກຊາຍກົກ) ນອນແລ້ວບໍ ? ຍາພໍ່ຕາແສງເອີ້ນໃສ່ແມ່ ຕາມຄວາມສະຫນິດສະຫນົມ, ແມ່ງົວເງຍລຸກຂຶ້ນມາເຮັດຄືກັບວ່າບໍ່ຮູ້ເລື່ອງ

ຫຍັງໝົດ.

- ມີຫຍັງບໍ່ຂະນ້ອຍ ຍາພໍ່ ?

- ທ່ານມະຫາຢູ່ບໍ່ ?

- ໂອ ຍາພໍ່ມາຊ້າໄປໜ້ອຍໜຶ່ງຂະນ້ອຍ, ເຈົ້າເພັດ ຊະລາດ ໃຫ້ຄົນມາຮັບເພິ່ນໄປແລ້ວເດ້. ແມ່ຕອບຢ່າງ ບໍ່ຂ້ອງບໍ່ຄາ.

- ມາຮັບໄປຫວ່າງໃດ ? ຫວ່າງທິວຄ່ຳ ເອົາຄືວ່າເຫັນ ຢູ່ ? ຕາແສງເຮັດສຽງຮ້າຍ.

- ຫວ່າງບ່າຍສີ່ໂມງປາຍນີ້ນ່າຂະນ້ອຍ, ແມ່ອະທິບາຍ ຕື່ມດ້ວຍນ້ຳສຽງຊື່ໆ

- ມາຮັບໄປໃສລະ ?

- ຄືວ່າໄປບ້ານເກີນນີ້ລະ ຂະນ້ອຍ

- ບັກລາຊິເດ້ ? ຕາແສງສໍ່ສືບຫາຜູ້ເປັນຫລານຊາຍ ໃຫ້ສິນເລື່ອງ

- ໂອ້ຍ ຜູ້ນັ້ນກິນເຂົ້າແລງແລ້ວ ກໍແມ່ນວ່າໂຕນ ເຮືອນໂລດ ຄືຊິເຂົ້າໄປລົມສາວໃນບ້ານຫນອງບຶກພຸ້ນບໍ່ຈັກ.

- ເອີ້ຊັ້ນ ເຮົາເຂົ້າໄປຊອກຫາບັກຊາລີໃນບ້ານຫນອງບຶກພຸ້ນດີກວ່າ ລາງເທື່ອທ່ານມະຫາ ກັບມາແລ້ວຢູ່ພຸ້ນນຳກັນກໍເປັນໄດ້. ຕາແສງຊວນເອົາຫມົດທຸກຄົນ ອອກຈາກບໍລິເວນຖຽງ. ຂາຍາງຜ່ານກັບອອກໄປນັ້ນ ພວກເພິ່ນເວົ້າກັນແຮງໆວ່າ ຖ້າພໍ່ລີ້ໃນກອງເຟືອງ ກໍຄົງຊອກບໍ່ພົບດອກ ເພາະກອງເຟືອງຫນາ ແລະ ກວ້າງຫລາຍ, ນັກສືບບາງຄົນສະເຫນີໃຫ້ຍາງຍ່ຳກອງເຟືອງ ທັງເອົາປາຍປືນທິ່ງລົງ. ທຸກການກະທຳຂອງພວກເຂົາ ພໍ່ກັບຫລານຊາຍໄດ້ຍິນ ແລະເຫັນຫມົດ ເພາະພາກັນລີ້ຫມູບຢູ່ໃນພຸ່ມຫນາມຂ້າງກອງເຟືອງນັ້ນເອງ. ເມື່ອເຫັນວ່າເຂົາອອກໄປຫວິດແລ້ວ ພໍ່ກໍຂຶ້ນມາປຶກສາຫາລືກັບແມ່ ແລະ ຍ້ອງວ່າ ແມ່ມີຜະຫຍາດີ ຕົວະໄດ້ຄື. ແມ່ບອກໃຫ້ພໍ່ຫນີໄປໃນຄືນນັ້ນ ແຕ່ພໍ່ບອກວ່າ ບໍ່ຢາກໄປເພາະວ່າຫ່ວງລູກເມຍ ແລະຄິດວ່າສາມາດຫລົບລີ້ຢູ່ຫນີ້ຕໍ່ໄປໄດ້ຢູ່. ຕົກເດິກ ພວກທະຫານກັບນັກສືບກັບມາອີກ ໂດຍບໍ່ມີຕາແສງ, ປາກົດວ່າພວກເຂົາມີຄວາມສົງໄສຕໍ່ຕາແສງ ຈຶ່ງກັບຄືນມາ. ໂຊກດີ ແມ່ໃຫ້ພໍ່ລົງໄປລີ້ນອນຢູ່ໃນພຸ່ມໄມ້ ຂ້າງລານເຂົ້າ.

ເຫັນວ່າການຈັບກຸມເທື່ອນີ້ ແມ່ນເລື່ອງສຳຄັນຮ້າຍແຮງ ແມ່ຈຶ່ງອ້ອນວອນໃຫ້ພໍ່ຫລົບຫນີ ໂດຍຢືນຢັນວ່າ ແມ່ເອງສາມາດລ້ຽງລູກກຸ້ມ, ເພື່ອຄວາມຄັກໃຈ ແມ່ບອກພໍ່ວ່າ ຈະພາລູກໄປຢູ່ກັບພີ່ນ້ອງທີ່ທ່າງ່ອນ, ເມື່ອໃດພໍ່ປອດໄພແລ້ວ ຈຶ່ງຈະນຳໄປຫາ. ດັ່ງນັ້ນ ໃນອ້ອນແຈ້ງ ພໍ່ກັບອ້າຍຊາລີ ຈຶ່ງຍ່າງລັດທົ່ງ ໄປຮອດບ້ານຜາງແຫ້ງ ໃນຕອນເຊົ້າແຕ່ເດິກ. ພໍ່ໄດ້ຮັບຄວາມຊ່ອຍເຫລືອ ຈາກຍາພໍ່ທົວຄູ ວັດຜາງແຫ້ງ ຊຶ່ງເວລານັ້ນ ມີອາຍຸ 100 ກວ່າປີແລ້ວ, ລູກສິດວັດເອົາພໍ່ໄປນອນໄວ້ໃນປ່າຫຍ້າເລົາ ເພາະຢ້ານວ່າ ນອນເທິງກຸຕິ ຈະບໍ່ປອດໄພ, ລີ້ຊ່ອນຢູ່ 4-5 ມື້ ພໍ່ຈຶ່ງໃຫ້ຄົນໄທບ້ານດຽວກັນຜູ້ຫນຶ່ງ ຊື່ທ້າວສິງ ຫລືພໍ່ອີ່ຜົງໄປສົ່ງຂ່າວໃຫ້ແມ່ຮູ້ວ່າ ປອດໄພດີ ແລະ ຂໍເອົາເງິນມາໃຊ້ສອຍຈຳນວນຫນຶ່ງ ຊຶ່ງແມ່ກໍ່ໃຫ້ມາ. ແຕ່ຫລາຍເທື່ອເຂົ້າແມ່ຈຶ່ງມີຄວາມສົງໄສ ເພາະທຳມະດາ ພໍ່ເກືອບບໍ່ຕ້ອງໃຊ້ເງິນເລີຍ ແລະ ພໍ່ກໍ່ຮູ້ວ່າ ແມ່ຕ້ອງປະຢັດເງິນໄວ້ໃຊ້ຈ່າຍໃນຄາວຈຳເປັນ, ເມື່ອທ້າວສິງມາຂໍເງິນອີກ ເປັນເທື່ອທີ 6 ແມ່ກໍ່ໃຫ້ດ້ວຍຄວາມລະມັດລະວັງຕົວ ຢ້ານເຂົາຄິດຫາທາງມາປຸ້ນ,

ແມ່ສືບຖາມນຳຄົນຖຽງໃກ້ ຈຶ່ງຮູ້ວ່າ ຄົນຜູ້ນີ້ມັກຫລິ້ນການພະນັນ ແລະ ເວລານັ້ນ ກໍມີວົງໄພ້ ວົງຖົ່ວລະບາດຢູ່ຕາມຫ້ອງຖິ່ນ ຊົນນະບົດຫລາຍແຫ່ງ. ເທື່ອສຸດທ້າຍ ແມ່ຝາກແຕ່ເສື້ອໃຫຍ່ (ນອກ) ໄປໃຫ້ພໍ່ ແລະ ສັ່ງຄວາມບອກພໍ່ວ່າ ໃຫ້ອ້ານໄປຝັ່ງຂວາ ສ່ວນແມ່ຈະກັບໄປຢູ່ນຳພີ່ນ້ອງ. ແຕ່ຄວາມຈິງ ສິ່ງທີ່ແມ່ກັງວົນໃນເວລາ ນັ້ນ ແມ່ນອາການເຈັບຕາຂອງລູກສາວນ້ອຍ ອາຍຸເຈັດເດືອນຫລາຍກວ່າ. ແມ່ຢາກເອົາລູກໄປໂຮງໝໍ. ເຫັນໄດ້ວ່າ ແມ່ມີຄວາມຫ່ວງໃຍໃນສຸຂະພາບອະນາໄມຂອງລູກທີ່ສຸດ ຕໍ່ມາພໍ່ຈຶ່ງເລົ່າໃຫ້ແມ່ຟັງວ່າ ໄດ້ໃຫ້ທ້າວສິງມາຫາແມ່ພຽງແຕ່ 2 ເທື່ອເທົ່ານັ້ນ ແຕ່ຜູ້ກ່ຽວມາຮອດ 5-6 ເທື່ອ ແລະ ຕົວະເອົາເງິນໄປໄດ້ຈຳນວນໜຶ່ງ.

ແມ່ເອົາເອື້ອຍດາລາໄປກວດຕາ ແລະ ໄດ້ຮັບຢາມາປິ່ນປົວ ແລ້ວຈຶ່ງຂົນເຄື່ອງໃສ່ກວຽນ ອອກໄປຢູ່ນຳພີ່ນ້ອງທີ່ທ່າງ່ອນ, ນອກຈາກເຄື່ອງໃຊ້ທຳມະດາໆແລ້ວ ແມ່ຍັງຕ້ອງຂົນຍ້າຍຫີບຫວາຍ ໃສ່ປື້ມຂອງພໍ່ຈຳນວນຫ້າຫີບໄປມ້ຽນໄວ້ບ່ອນປອດໄພ. ນອກນີ້ ແມ່ມີລົດຖີບທີ່ພໍ່ໃຊ້ຂີ່ໄປ

ເຮັດການແຕ່ລະມື້ນຳຄັນໜຶ່ງ ລາຄາ 16 ກີບ (ຕອນຂາຍໄດ້ 12 ກີບ). ຢູ່ທ່າງອນໄດ້ໜຶ່ງເດືອນ ກໍມີຜູ້ມາບອກຂ່າວວ່າ ພໍ່ຢາກໃຫ້ແມ່ຍ້າຍໄປສິນທິບ ແມ່ຈຶ່ງຂາຍລົດຖີບ ເຄື່ອງຖ້ວຍຊາມ ແລະ ຕູ້ໂຕະຈຳນວນໜຶ່ງໃຫ້ພີ່ນ້ອງ ສ່ວນປື້ມຂອງພໍ່ແມ່ນຝາກໄວ້ຢູ່ເຮືອນພີ່ນ້ອງແລ້ວ ແມ່ກໍພາລູກທັງສອງກັບມາຢູ່ບ້ານອູບມຸງ ໂດຍພັກຢູ່ເຮືອນ ພໍ່ເຖົ້າສິງ ທີ່ເປັນນ້ອງຊາຍຂອງແມ່ເຖົ້າພັນ. ການກະກຽມຍ້າຍຂອງເທື່ອນີ້ ແມ່ໄດ້ເຮັດຕາມການແນະນຳຂອງລູກນ້ອງພໍ່ ຊຶ່ງເປັນຜູ້ມາຕິດຕໍ່. ຄົນຜູ້ນີ້ເຄີຍມາເພິ່ງພາ ອາໄສພໍ່ຢູ່ລະຍະໜຶ່ງ ເວລາເຂົ້າມາຢູ່ວຽງຈັນໃໝ່ໆ ເຂົາເອີ້ນພໍ່ວ່າ ອາຈານ.

ດ້ວຍໄວພຽງ 21 ປີ ແລະ ມີລູກນ້ອຍສອງຄົນຕິດໂຕ ແມ່ພ້ອມທີ່ຈະຜະເຊີນໜ້າກັບພາຍຸຊີວິດທຸກແນວ ! ມື້ໜຶ່ງຈູງລູກ ແລະ ໂຊນເອົາລູກຜູ້ນ້ອຍ ແລະແລ້ວໃນຍາມບ່າຍຄ້ອຍຂອງມື້ໜຶ່ງ ໃນເດືອນສາມປີ 1941 ແມ່ທຳທາຍາງໄປຫລິ້ນຢູ່ແຄມຂອງທ່າວັດອູບມຸງ ບ່ອນຕັ້ງຫໍຜີ "ພໍ່ໄທຍປູ່"

ເພື່ອລໍຖ້າເຮືອອີໂມນ້ອຍທີ່ຈະພາຂ້າມຂອງ. ແມ່ນຸ່ງສິ້ນຜືນເກົ່າໆໄວ້ນອກ ສ່ວນທາງໃນ ແມ່ນຸ່ງສິ້ນຫມີ່ຕໍ່ຕີນຂິດໄຫມຄໍາຜືນອ່າວໃຫມ່, ຫຍິບຖົງຜ້າຍາວຄ່າຄີບ ເອົາເງິນກີບທີ່ວຫນານໃສ່ຈີບແຫນັບ ທ້ອຍໃສ່ທີ່ວສີ້ນ ໃຫ້ລູກນັ່ງເຕັງໄວ້. ສານແມ່ລູກຍ່າງໄປຕາມຄັນຄູ ເພື່ອໄປໄຫວ້ຄອບລາ "ພໍ່ໃຫຍ່ປູ່" ຕາມຮີດຄອງ ແລະ ຂໍຄວາມຄຸ້ມຄອງ. ຜູ້ຕິດຕາມໄປສົ່ງແມ່ແມ່ນແມ່ເຖົ້າທອດ ອາຍຸ 60 ກວ່າ ຊຶ່ງຍັງແຂງແຮງດີ ເພິ່ນຖືຫີບຫວາຍນ້ອຍໃຫ້ແມ່ ແລະ ມີຫນາກຂາມຫວານຖົງຫນຶ່ງຝາກໃຫ້ພໍ່ ລະຍະທີ່ລໍຖ້າຄືນໄປຊອກເຮືອ ແມ່ພາລູກຂຶ້ນໄປນັ່ງພັກເຊົາຢູ່ເຮືອນຫລັງຫນຶ່ງ (ເຮືອນນາງແຫວນ) ຢູ່ຕິດກັບຫໍພີພໍ່ໃຫຍ່ປູ່, ປະຕູເຮືອນໄຂແວ້ນຢູ່ ແຕ່ເຈົ້າຂອງເຮືອນບໍ່ຢູ່ ອອກໄປນອນຖຽງເຝົ້າລານເຂົ້າ, ແມ່ກັບແມ່ເຖົ້າທອດພາກັນຂຶ້ນໄປນັ່ງເຊົາຫລີກຕາຄືນ ແລະ ໂສກັນວ່າ ຜູ້ໄປເອົາເຮືອໄປດົນໂພດ. ບໍ່ທັນທີ່ຈະໄດ້ລົງຈາກເຮືອນ ນັກສືບລາວຊຶ່ງເປັນໄທບ້ານຂຸນຕາ ກໍຈູງລົດຖີບ ຍ່າງມາຕາມທາງຄູເບັດຫນ້າມາໃສ່ເຮືອນທີ່ແມ່ນັ່ງພັກເຊົາຢູ່ ແລະ ບອກວ່າ

ຂໍຈັບໄປໃສ່ຄຸກ ເພາະຈະໂຕນໜີ. ແມ່ຕໍ່ສູ້ ຖຽງຄວາມ
ແລະປະຕິເສດວ່າ ບໍ່ກະວ່າຈະຂ້າມຂອງ ພຽງແຕ່ມາຍ່າງ
ຫລິ້ນຊື່ໆ. ແຕ່ນັກສືບຈັບເອົາທີບໄວ້ ແລະບອກວ່າ
ນີ້ແມ່ນຫລັກຖານ ຢັ້ງຢືນວ່າ ແມ່ຈະຂ້າມຂອງໄປຝັ່ງຂວາ.
ນັກສືບໃຊ້ອຳນາດບັງຄັບເອົາແມ່ ແລະ ລູກນ້ອຍທັງສອງ
ໄປພ້ອມ ແຕ່ຍ້ອນວ່າເວລານັ້ນຄ້ອຍຄ່ຳແລ້ວ ..., ເຂົາຈຶ່ງ
ເອົາແມ່ກັບລູກໄປຝາກນອນຢູ່ທີ່ ເຮືອນທ່ານກິມມີແຊ
(ຫົວໜ້າຕຳຫລວດສະໄໝຝະລັ່ງ) ຄຸ້ມນ້ຳພຸ ລໍຖ້າມື້ເຊົ້າ.
ດ້ວຍຄວາມເປັນຫ່ວງເປັນໃຍຫລານ ແລະ ເຫລນ ແມ່ເຖົ້າທອດ
ໄດ້ຂໍໄປນອນ ເປັນໝູ່ແມ່. ຄືນທັງໝົດນຳໜ້າໂດຍ
ທ່ານນັກສືບລາວ ທີ່ຍຶດເອົາທີບແມ່ໄປໃສ່ກົ້ນລົດຖີບໄວ້ເປັນ
ຫລັກຖານພະຍານ, ແມ່ເຖົ້າທອດ, ແມ່ກັບລູກສອງຄົນ
ທັງອຸ້ມທັງຈູງກັນ ຈຶ່ງຍ່າງຜ່າບ້ານອອກມາ ຖ້າມກາງຄວາມມືດ
ມິດຂອງຍາມຄ້ອຍຄ່ຳ ແລະ ບັນຍາກາດອັນວັງເວງງຽບເສົ້າ.
ພາບແມ່ຍິງເຖົ້າໆ ກັບຫລານສາວ ແລະ ເຫລນນ້ອຍ
ຍ່າງຕ້ອຍໆນຳຫລັງ ທ່ານນັກສືບລາວ ລູກນ້ອງຝະລັ່ງ ທີ່ຈູງ

ລົດຖີບໃສ່ທີບແມ່ ຖ້ານກາງແສງຕາຂອງພໍ່ແມ່ພີ່ນ້ອງ ປະຊາຊົນ ບ້ານອູບມຸງໃນມື້ນັ້ນ ຍັງຄົງຕິດຕາ. ແລະ ຢູ່ໃນ ຄວາມຈື່ຈຳຂອງຫລາຍຄົນ ຈົນເທົ້າເຖິງປັດຈຸບັນ. ບໍ່ພໍເທົ່າໃດ ຂ່າວນີ້ກໍຮູ້ກັນໄປທົ່ວບ້ານ, ຄົນຜູ້ມາຕິດຕໍ່ຈະເອົາແມ່ອ້າມ ກໍຖືກພີ່ນ້ອງຂອງແມ່ຮ້າຍດ່າໃຫ້ ຈຶ່ງຫລົບຫນີໄປ. ຕື່ນມື້ເຊົ້າ ມາ ແມ່ກໍຖືກເຈົ້າຫນ້າທີ່ສືບປາກຄຳ ກ່ອນຈະໄປຂຶ້ນສານ, ເຖິງຈະຂຶ້ນສານ ແມ່ກໍບໍ່ຄິດເກງກົວ ເພາະຄິດວ່າ ຕົນເອງ ບໍ່ໄດ້ກະທຳຜິດຄິດຮ້າຍອັນໃດ. ນີ້ເປັນຫນ້າສົນໃຈ ແມ່ມີຄວາມ ຄິດໃຫ້ເຈົ້າຫນ້າທີ່ຟ້ອງຂຶ້ນສານ ໄດ້ແນວໃດທັງໆທີ່ເປັນ ຄົນບໍ່ມີການສຶກສາເລີຍ. ແມ່ເຄີຍມີປະສົບການກ່ຽວກັບ ການຟ້ອງຮ້ອງມາຄັ້ງຫນຶ່ງ ເມື່ອແມ່ຢູ່ອຸດອນ ເພື່ອຢ່າຮ້າງກັບ ຜົວຄົນທີ 1 ຊຶ່ງເປັນຮອດອາຈານສອນຢູ່ ວິທະຍາໄລພະລະ ສຶກສາ. ເທື່ອນັ້ນແມ່ຖືກຜົວບອກວ່າ ໃຫ້ຟ້ອງສານເອົາ ຖ້າຢາກຮ້າງກັບຜົວ ພຽງເພື່ອໃຫ້ໄດ້ກັບມາວຽງຈັນ ຢາມຄອບ ຄົວແມ່ເຖົ້າ. ແມ່ເລົ່າວ່າສາເຫດຕົ້ນຕໍກໍແມ່ນ ຍ້ອນຜົວຄົນນີ້ (ພໍ່ອ້າຍຄິດ) ຫຶງຫວງຫລາຍ. ເມື່ອແຕ່ງດອງແລ້ວ ເອົາຫ້າມ

ອອກນອກເຮືອນຜູ້ດຽວ. ເວລາໄປຕະຫລາດ ແມ່ຕ້ອງຍ່າງອອກກ່ອນ ເພາະຜົວເພິ່ນຕ້ອງການເບິ່ງວ່າ ແມ່ບໍ່ງວາກຊ້າຍງວາກຂວາ ເບິ່ງຜູ້ອື່ນ ແລະ ຍັງມີ ເລື່ອງບໍ່ສະບາຍໃຈອື່ນໆອີກຊຶ່ງລ້ວນແຕ່ແມ່ນຍ້ອນຄວາມຫຶງຫວງ. ໃນທີ່ສຸດ, ຄັ້ງໜຶ່ງເມື່ອລູກຊາຍ ອາຍຸໄດ້ 6 ເດືອນປາຍແລ້ວ ແມ່ຂໍຜົວນາຍາມແມ່ເຖົ້າທີ່ວຽງຈັນ, ສ່ວນຜູ້ຜົວເວົ້າໃນທຳນອງທ້າທາຍວ່າ "ຖ້າຢາກໄປວຽງຈັນຫລາຍ ໃຫ້ຮ້າງກັນກ່ອນ" ແມ່ຖືເອົາຄຳທ້າຂອງຜົວຟ້ອງຢ່າ ໂດຍບໍ່ເອີ້ນຄ່າສິນໄຫມຂໍແຕ່ຄ່າລ້ຽງລູກປະຈຳເດືອນ ດ້ວຍການຊ່ອຍເຫລືອຂອງພີ່ນ້ອງ ແມ່ຟ້ອງຢ່າຜົວ ທີ່ເປັນອາຈານສອນ ເມື່ອຕົນເອງມີອາຍຸພຽງ 17 ປີ, ແມ່ບໍ່ຢ້ານຄຳວ່າເປັນ "ແມ່ຮ້າງເລີຍ".

ຈາກບົດຮຽນອັນນີ້ ແມ່ຈຶ່ງບໍ່ຫວາດຫວັ່ນເຈົ້າໜ້າທີ່ຝະລັ່ງຟ້ອງຂຶ້ນສານ ແທນທີ່ຈະເອົາໄປ ຂັງຄຸກຂີ້ໄກ່ໂລດເພາະຊາວບ້ານອື່ນໆ ທີ່ຫຸ້ມມາຟັງເຫດການ ຕ່າງກໍຢັ້ງຢືນຄືກັນ. ໃນເມື່ອບໍ່ມີກົດລະບຽບ ຫ້າມບໍ່ໃຫ້ມາກາຍໃກ້ຝັ່ງຂອງ ໃຜໆກໍສາມາດມາໄດ້. ເຫດການຕອນນີ້ ແມ່ວ່າ ບາງເທື່ອອາດມີ

ສາເຫດຈາກເລື່ອງສ່ວນຕົວເລັກນ້ອຍ ຄືຜູ້ທີ່ມາຕິດຕໍ່ເອົາແມ່ອ້ານນີ້ ອາດຢາກໄດ້ສິນຈ້າງຣາງວັນ ຈຶ່ງໄປຟ້ອງນັກສືບຝະລັ່ງ. ຢູ່ທີ່ສານ ຊຶ່ງເວລານັ້ນ ຕັ້ງຢູ່ຕຶກຕ່ຳໃນບໍລິເວນທີ່ເປັນໂຮງພິມສຶກສາຄຣວນີ້ ແມ່ອຸ້ມລູກສາວ ແລະ ຈູງແຂນລູກຊາຍອາຍຸ 6 ປີໄປນຳ. ການພິຈາລະນາຄະດີບໍ່ກິນເວລາດົນເພາະທີບໃສ່ເຄື່ອງນຸ່ງທັງຂອງແມ່ ແລະ ລູກ ເປັນຫລັກຖານທີ່ປະຕິເສດບໍ່ໄດ້ ແມ່ຍອມຮັບວ່າຈະອ້ານໄປຫາຜົວ ແລະບໍ່ເຫັນວ່າມັນຜິດຕໍ່ກົດລະບຽບບ້ານເມືອງຂໍ້ໃດ, ສານຕັດສິນໃຫ້ແມ່ໄປຢູ່ຄຸກຂີ້ໄກ່ ພ້ອມກັບລູກນ້ອຍທັງສອງ. ພໍດີຂະນະນັ້ນທ່ານຫມໍຝະລັ່ງທີ່ຮູ້ຈັກແມ່ຕອນພໍ່ໄປນອນໂຮງຫມໍ ຫວ່າງສີ່ທ້າເດືອນກ່ອນນັ້ນ ມາໄດ້ຍິນ ເພິ່ນຈຶ່ງເຂົ້າມາສໍ້ຖາມ, ເມື່ອຮູ້ເລື່ອງກໍເວົ້າຂຶ້ນວ່າ : ເປັນທຳມະດາທີ່ ເມຍຢາກໄປຫາຜົວ, ເພິ່ນເລີຍສະເຫນີໃຫ້ເອົາແມ່ໄປຝາກຂັງ ຢູ່ໂຮງຫມໍ (ມະໂຫສົດ) ໂດຍໃຫ້ທະຫານຍາມໄປເຝົ້າຮັກສາ. ແມ່ເລົ່າວ່າ ຍາພໍ່ທອງໄລ່ເປັນນາຍພາສາແປໃຫ້ແມ່ຟັງວ່າ ທ່ານຫມໍຝະລັ່ງ ດູຕົນແມ່ ແລະ ເຫັນວ່າແມ່ເປັນຜູ້ກະຕັນຍູຮູ້ຄຸນ ມີຄວາມຊື່ສັດຕໍ່ຜົວ

ເພິ່ນວ່າ : ບາງມື້ເປັນສິນດີ ລາວຄິດຮອດຜົວ ລາວກໍຕ້ອງຢາກໄປຫາ, ລາວຮັກຜົວຮັກລູກ, ຂ້ອຍເຫັນລາວມາສິ່ງເຂົ້າຜົວຢູ່ໂຮງຫມໍເກືອບເດືອນ ອຸ້ມລູກມານຳ, ລູກລາວກໍຫນ້າຮັກ, ລາວເປັນລູກຝະລັ່ງຄືຂ້ອຍ, ຂ້ອຍຢາກຊ່ອຍ, ແມ່ຍິງແບບນີ້ຫາຍາກ.

ເປັນອັນວ່າ ແມ່ກັບອ້າຍຄິດ ແລະ ເອື້ອຍດາລາໄດ້ເຂົ້າໄປກິນນອນພັກຜ່ອນ ຢູ່ໃນໂຮງຫມໍ ມະໂຫສົດ ໃນຖານະຜູ້ຖືກກັກຂັງບໍລິເວນເປັນເວລາ 1 ເດືອນ ກັບ 18 ມື້. ເກືອບທຸກມື້ ທ່ານຫມໍຝະລັ່ງເອົາສະບູ ແລະ ເງິນໃຫ້ແມ່ບອກວ່າເອົາໄວ້ຊື້ເຂົ້າຫນົມໃຫ້ລູກກິນ ບາງມື້ໃຫ້ຫ້າບີ້ ບາງມື້ໃຫ້ຮອດສິບບີ້, ແມ່ທ້ອນເງິນໄດ້ຫລາຍກີບ ແລະ ສະບູຫລາຍກ້ອນ.

ເມື່ອອອກຈາກຄຸກໂຮງຫມໍ ແມ່ກໍຈັດແຈງແຕກເອົາເປັນເງິນກີບທີ່ວຫນານໄວ້. ເວລານັ້ນກົງກັບລະຍະກຸດສົງການ

ພໍດີ. ພໍ່ຕູ້ວັນທອງ ຄຸ້ມເຫນືອຕະຫລາດກົກໂພ ໃຫ້ລູກສາວມາບອກແມ່ວ່າ ໃຫ້ກຽມໂຕຂ້າມໃນມື້ວັນສັງຂານລ່ວງນັ້ນໂລດ ເພິ່ນມີຜູ້ພາຂ້າມແລ້ວ ບໍ່ຕ້ອງບອກໃຫ້ໃຜຮູ້ນຳ. ເມື່ອຮອດມື້ນັດຫມາຍ, ຕອນບ່າຍ ແມ່ນຸ່ງສິ້ນຜືນເກົ່າ ແຕ່ທາງໃນແມ່ນສິ້ນຫມີ່ບໍ່ລ່ວງ ຜືນໃຫມ່ງາມທີ່ສຸດ ຍັງບໍ່ທັນຕໍ່ຕີ໋ງ, ຫ້ອຍຖົງເງິນເກືອບຮອບແອວ ແລ້ວອຸ້ມເອົາເອື້ອຍດາລາຊຶ່ງຕອນນັ້ນອາຍຸໄດ້ແປດເດືອນປາຍ ແລະ ຈູງອ້າຍຄິດໄປທ່ຽວຫລິ້ນທຳທ່າວ່າໄປເບິ່ງຄົນຫລິ້ນໄພ້ ຫລິ້ນຖົ່ວຢູ່ເດີ່ນໂນນຕານ ຄຸ້ມເຫນືອວັດໄຕນ້ອຍ ບ່ອນເພິ່ນຕັ້ງວົງໄພ້ວົງຖົ່ວ ແລະຂາຍຂອງກິນ, ແມ່ຊື້ໄກ່ຕົ້ມຂອງ ປ້າວັນທອງ (ແມ່ເອີ້ນເພິ່ນວ່າເອື້ອຍ) ແລະ ເວົ້າກັບອຸ່ມອິ່ມກ່ຽວກັບ ເວລານັດຫມາຍ. ຕາມທຳມະດາ ປ້າວັນທອງເອງ ບໍ່ເຄີຍເຮັດຂອງຂາຍຈັກເທື່ອແຕ່ເພື່ອມາສັງຊອມເບິ່ງສະພາບການ ປ້າຈຶ່ງເຮັດຕົ້ມໄກ່ມາຂາຍເປີດໂອກາດໃຫ້ແມ່ໄດ້ເວົ້າລົມໃກ້ຊິດ. ພໍມືດຊຸ້ມລ້າວຫລຽວເບິ່ງຫນ້າຄົນ ບໍ່ຈື່ກັນແລ້ວ ປ້າວັນທອງ ກໍພາສາມແມ່ລູກໄປເຮືອນ ຢູ່ແຄມຂອງ ພໍແຕ່ກ້າວຂາຫວິດຂັ້ນໄດ ກໍເຫັນ

ແສງໄຟຮຸ່ງອື່ງຕື່ງ ແລະ ມີພາເຂົ້າແຕ່ງໄວ້ຕ້ອນຮັບ ເຮັດໃຫ້ແມ່ຕື້ນຕັນໃຈຈົນປາກບໍ່ອອກ. ພໍ່ຕູ້ວັນທອງ ບອກໃຫ້ແມ່ພາລູກກິນເຂົ້າ ແຕ່ແມ່ກິນຫຍັງບໍ່ລົງ. ບັງເອີນເກີດຟ້າລົມພາຍຸພັດແຮງ ຄືກັບວ່າ ຈະມີຝົນຕົກຫ່າໃຫຍ່ ເຮັດໃຫ້ແມ່ຕ່ຳຄ້ອຍນ້ອຍໃຈ ຈົນສະອື້ນໄຫ້ວ່າ :

- ຣວ້າຍ ມັນມີກຳມີເວນຕິບໍ ພໍ່ລຸງເອີຍ ຄາດຈະບໍ່ໄດ້ເຫັນຫນ້າກັນອີກແລ້ວຕິບໍ ... ເຫມີດບຸນວາສະຫນາຈາກກັນແລ້ວລະຕີ ຊາດນີ້ຄືຊິບໍ່ໄດ້ໄປແລ້ວລະ! ແຕ່ພໍ່ຕູ້ວັນທອງຊ້ຳເວົ້າວ່າ :

- ຣວ້າຍ ຢ່າເວົ້າຈັ່ງຊັ້ນລູກ, ລຸງຊິວິ່ງວອນ ສັກຂະເທວະດາເພິ່ນຊອຍ, ຖ້າເບິ່ງອີກກ່ອນ, ເບິ່ງລົມນີ້ຊິລົມດົນປານໃດ, ພໍເພິ່ນວ່າແລ້ວບໍ່ດົນ ລົມຝົນນັ້ນກໍເຊົາໄປແທ້. ຝົນທີ່ທຳທ່າວ່າຈະຕົກ ຍືດເຍື້ອກັບຣວ້ັຍເມັດ ລົມອ່ອນແຮງລົງໃນທັນທີທັນໃດ, ສາຍຂອງພໍ່ຕູ້ວັນທອງມາບອກວ່າ ຄົນມາຮັບລໍຖ້າຢູ່ຕາຝັ່ງແລ້ວ ປາກົດວ່າ ຍ້ອນເກີດຟ້າລົມນັ້ນເອງພວກທະຫານຍາມຢູ່ລ້າຍຕາມແຄມຝັ່ງ ພາກັນແລ່ນໄປຫລົບຝົນ

ຢູ່ເຫິງຄ້າຍໃຫຍ່ ແລ້ວບໍ່ກັບລົງມາອີກ ນັບວ່າເປັນໂອກາດດີແທ້ໆ ພໍ່ຕູ້ວັນທອງບອກວ່າ "ໄປໄດ້ແລ້ວລູກ! ພໍແຕ່ແມ່ກັບອ້າຍຄິດຍ່າງອອກມາຫວິດເຮືອນ ກໍມີຄົນເຕັຍ ຂາລີບແຕ່ແຂນແຂງແຮງ ຊ່ອຍຈ່ອງດຶງເອົາອ້າຍຄິດລົງທ່າ ໂດຍຈ່ອງຮາວໄມ້ໄຜ່ໄວ້. ແມ່ເອງ ກໍມັດເອື້ອຍດາລາໃສ່ແອວ ໄຕ່ຕາມຂັ້ນໄດທີ່ຊຸບກິ່ງດິ່ງ ລົງທ່ານ້ຳຂອງ ທ່າມກາງຄວາມມືດມິດຕອນຫລັງພາຍຸ. ຄົນມາກັບຜູ້ຊາຍພິການຂາລີບສອງຄົນທີ່ມາຮັບເອົາແມ່ຂ້າມຟາກ ຊື່ວ່າອ້າຍໜື່ນ ກັບອ້າຍແສນ, ເປັນໄທບ້ານສີຊຽງໃຫມ່ ມີອາຊີບເອົາເຄື່ອງຂ້າມຂອງ ໂດຍສະເພາະທ່າບ່ອນນີ້ຢູ່ອ່າວລັບຕາ ຮູ້ສະເພາະແຕ່ຜູ້ປະກອບທຸລະກິດລັບຫລືນັກເລງເອົາຂອງຂ້າມຟາກເທົ່ານັ້ນ. ເຮືອນ້ອຍທີ່ມີຄົນພາຍທາງຫົວຄົນໜຶ່ງ ຂັດທ້າຍຄົນໜຶ່ງ ລອຍລິ່ວໆຂ້າມຂອງໄປບຶດດຽວກໍຕຳຕະຝັ່ງຊາຍຫາດ ຊື່ບ້ານສີຊຽງໃຫມ່. ຢູ່ຊາຍຫາດນີ້ພໍ່ ແລະ ໜູ່ຄູ່ ມາຄອງຖ້າຮັບຢູ່ຕັ້ງແຕ່ເວັນ ພໍແຕ່ຮູ້ວ່າແມ່ນເຮືອນ້ອຍທີ່ພາແມ່ຂ້າມມາຮອດ ສຽງຮ້ອງຕ້ອນຮັບກໍດັງແຊວໆຂຶ້ນວ່າ: "ມາແລ້ວ, ນາງມະທີນຳທາພະເຫວດ



*ແມ່ກັບລູກ 8 ຄົນ - ເສື້ອ ກະໂປງ ແລະໂສ້ງ  ທີ່ລູກສາວໃສ່ ແມ່ນສີມືແມ່ ຕັດຫຍິບເອງ.*

*ບ້ານອູບມຸງ, ມ. ສີໂຄດຕະບອງ, ວຽງຈັນ  1952*

ມາແລ້ວ!" ພໍ່ແລ່ນມາຮັບ ແລະ ອຸ້ມເອົາເອື້ອຍດາລາຈາກແມ່, ຈາກນັ້ນ ກໍພາກັນເດີນທາງເຂົ້າໄປໜອງຄາຍ ດ້ວຍຄວາມດີໃຈ ທີ່ລູກເນີຍລອດພົ້ນອັນຕະລາຍ, ແລ້ວພໍ່ ແລະ ແມ່ກໍໄດ້ ມາຢູ່ຮ່ວມສຸກຮ່ວມທຸກນຳກັນ ໃນຜືນແຜ່ນດິນປະເທດອື່ນ.

ເມື່ອເຫດການ ລະຫວ່າງສອງຝັ່ງຂອງທະວີຄວາມຮ້າຍແຮງຂຶ້ນ ພໍ່ໄດ້ພາຄອບຄົວຍ້າຍເຂົ້າໄປຢູ່ກຸງເທບ ໂດຍອາໄສໝູ່ຄູ່ ແລະ ຄູບາອາຈານ ຢູ່ວັດທີ່ພໍ່ເຄີຍບວດຮຽນຢູ່ໃຫ້ການຊ່ອຍເຫລືອ, ພໍ່ໄດ້ເຂົ້າເຮັດວຽກໃນນາມເຈົ້າໜ້າທີ່ຫໍສະໝຸດແຫ່ງຊາດ (ໄທ), ມີເງີນເດືອນ ແລະ ແມ່ກໍໄດ້ຊື່ວ່າເປັນ "ຄຸນນາຍ" ຢູ່ລະຍະໜຶ່ງ. ແມ່ໄດ້ຮຽນຮູ້ຊີວິດໃໝ່ຂອງຊາວກຸງເທບສະໄໝ ຊຸມປີ 1940 ຊຶ່ງເປັນລະຍະປະຕິວັດວັດທະນະທຳຂອງນາຍົກຜະເດັດການໄທ ຈອມພົນແປກພິບູນສົງຄາມ ຄືມີການຫ້າມນຸ່ງສິ້ນ, ການຄ້ຽວໝາກ ແລະປະເພນີດັ້ງເດີມອື່ນໆ ຂອງຊາວສະຫຍາມເອງອີກຫລາຍຢ່າງ. ແມ່ໄດ້ຮຽນຕັດຫຍິບເຄື່ອງນຸ່ງນຳຄົນບ້ານໃກ້ ຮຽນນຸ່ງສິ້ນ

ສະເກີດ, ໃສ່ຫມອກ ແລະ ໃສ່ຖົງຕີນຄືແມ່ຍິງຢຸລົບ ແລະ ເວົ້າຖາມສະບາຍດີ ທັງເຊົ້າແລະແລງ ກັບຄົນໃນເຮືອນ ຕົນເອງ ຕາມນະໂຍບາຍທັບສະໄຫມຂອງລັດຖະບານ. ຊີວິດຂອງແມ່ ໃນລະຍະນີ້ ຖືວ່າສະດວກສົມຄວນ ຊຶ່ງອາດເປັນ ຮາງວັນແຫ່ງຊີວິດຂອງແມ່ ຫລັງຈາກທີ່ຕ້ອງທຸກທໍລະມານ ມາຫລາຍແລ້ວ. ຈົນຮອດປີ 1948 ພໍ່ຈຶ່ງພາຄອບຄົວ ຕ່າວຄືນມາວຽງຈັນ.

ແຕ່ຄວາມລຳບາກ ຄວາມທຸກທໍລະມານ ຄວາມອົດ ທົນຂອງແມ່ ທີ່ຜ່ານພົ້ນມານີ້ ເປັນພຽງສ່ວນຫນຶ່ງເທົ່ານັ້ນ ເພາະເຫດການບ້ານເມືອງ ຍັງຄົງຍືດເຍື້ອຫຍຸ້ງຍາກຕໍ່ມາອີກ ດົນແລະສະມາຊິກໃນເຮືອນກໍຫລາຍຂຶ້ນ ສ່ວນພໍ່ໄດ້ຂຽນ ຕຳລາພາສາວັນນະຄະດີ ໄວ້ເປັນມໍລະດົກແກ່ຊົນຊາດ ລາວຫລາຍເລື່ອງຫລາຍຫົວ, ຄວາມສຳເລັດໃນການ ຂຽນຫນັງສືຂອງພໍ່ ສ່ວນຫນຶ່ງແມ່ນຍ້ອນແຮງກະຕຸ້ນ ກໍຄື ກຳລັງໃຈຈາກແມ່ ໂດຍສະເພາະການແຕ່ງກາບກອນ ສຳລັບ

ອ່ານ ແລະ ລຳ. ເຖິງວ່າແມ່ອ່ານບໍ່ໄດ້ ຂຽນບໍ່ເປັນ ແຕ່ແມ່ກໍມີຄວາມຈື່ຈຳເປັນເລີດ ເວລາພໍ່ອ່ານກາບກອນທີ່ຂຽນແລ້ວໃຫມ່ໆ ແມ່ຈະໃຫ້ຄວາມເຫັນວ່າ ສ່ວນໃດຂ້ອງບໍ່ຄ່ອງ ເປັນຕົ້ນ. ສິ່ງເຫລົ່ານີ້ ພວກລູກໆເອງກໍໄດ້ຮູ້ເຫັນເປັນປະຈັກຕາກັບທຸກຄົນ. ເວລາພວກລູກຂຽນ ແຕ່ງບົດກອນ ຫລື ນະວະນິຍາຍ ແລ້ວນຳໄປອ່ານສູ່ແມ່ຟັງ ແມ່ຈະໃຫ້ຄວາມເຫັນ ແລະ ຊ່ອຍແກ້ບ່ອນບໍ່ຄ່ອງໄດ້ຢ່າງໄວວາ.

ບົດຮຽນຊີວິດອັນລ້ຳຄ່າອີກຢ່າງຫນຶ່ງ ທີ່ແມ່ຖ່າຍທອດໄວ້ໃຫ້ລູກ ທັງຍິງ ແລະ ຊາຍກໍຄື ການຫລີກເວັ້ນການໃຊ້ຄວາມຮຸນແຮງຕໍ່ກັນ, ສຳລັບລູກສາວທີ່ຈະເປັນເຮືອນເປັນຊານ ແມ່ຖືສຳຄັນທີ່ສຸດ. ຫລັງຈາກໄດ້ກັນເປັນຜົວເປັນເມຍແລ້ວແມ່ສັ່ງວ່າ ຢ່າໄດ້ໃຫ້ຜົວລົງມືຕົບຕີເປັນອັນຂາດເພາະເມື່ອໃດ ຜົວຫາກເຄີຍຕີເມຍແລ້ວ ກໍຈະໃຊ້ວິທີການນັ້ນຕໍ່ໄປ. ເຫັນໄດ້ວ່າ ຄຳສັ່ງສອນອັນນີ້ຂອງແມ່ ທັນສະໄຫມ ແລະມີຜົນຕໍ່ລູກແມ່ຍິງທຸກຄົນ, ມັນເຕືອນໃຫ້ພວກເຮົາຊອກຮູ້ວິທີ

ຫລີກເວັ້ນການໃຊ້ຄວາມຮຸນແຮງຂອງຜູ້ຊາຍ. ບົດຮຽນອັນໜຶ່ງທີ່ແມ່ຖ່າຍທອດໃຫ້ກໍຄື ການຍັບຍັ້ງຄຳເວົ້າຫຍາບຕ່ຳທີ່ແຕະຕ້ອງກຽດຜູ້ຊາຍ. ຜູ້ຊາຍລາວ ກໍຄືຜູ້ຊາຍອາຊີ ໂດຍທົ່ວໄປຖືກຽດສູງ, ເມື່ອຜິດຖຽງກັນ ເວລາໃດແມ່ຍິງເວົ້າກະທົບເຖິງກຽດລູກຜູ້ຊາຍ ຫລືຄອບຄົວຂອງເຂົາແລ້ວ (ດາຮອດໂຄດວົງ ຫລືວ່າເຂົາເອງບໍ່ມີຄວາມສາມາດ ... ) ມັກຈະມີການຕອບໂຕ້ດ້ວຍກຳລັງ, ດັ່ງນັ້ນ ສິ່ງທີ່ຄວນຈົດຈຳສຳລັບເອົາຕົວລອດຈາກກຳປັ້ນ ຫລືໄມ້ຄ້ອນຂອງຜູ້ຊາຍ ກໍແມ່ນການຈຽມສົບຈຽມປາກ, ເວລາຜົວເມົາ ຫລື ຕົນເປັນຝ່າຍບົກພ່ອງແລ້ວ ຄວນມິດໄວ້, ຈະເປັນວິທີທີ່ສະຫລາດ.

ສິ່ງເລັກໆນ້ອຍເຫລົ່ານີ້ ອາດເປັນບົດຮຽນອັນດີໃຫ້ແກ່ແມ່ຍິງເຮົາ ເພື່ອປົກປ້ອງສິດສ່ວນຕົວ ຄືການບໍ່ຍອມໃຫ້ຜູ້ຊາຍໃຊ້ກຳລັງກາຍອົ່ມເຫັງ ນັບຕັ້ງແຕ່ລະດັບຄອບຄົວໄປຈົນເຖິງລະດັບສັງຄົມໃນປະເທດ. ຖ້າຍອມຈຳນົນ ໃນເລື່ອງໜຶ່ງແລ້ວ ມັນຈະກາຍເປັນນິໄສມັກຍອມຈຳນົນ ແລະ ກາຍເປັນ

ຄວາມອ່ອນແອຕິດຕົວເຮົາ. **ການປະຕິບັດສິດສະເຫມີພາບ ລະຫວ່າງຊາຍຍິງພາຍໃນຄອບຄົວ ແມ່ນພື້ນຖານອັນຈໍາເປັນ ທີ່ຈະສົ່ງເສີມໃຫ້ແມ່ຍິງກ້າວຂຶ້ນເຖິງຂັ້ນມີສິດສະເຫມີພາບ ຕໍ່ຫນ້າກົດຫມາຍ ຢ່າງແທ້ຈິງ. ເລື່ອງນີ້ ແມ່ຜູ້ບໍ່ຮູ້ຫນັງສື, ແມ່ຍິງທີ່ເກີດເມື່ອຕົ້ນສະຕະວັດນີ້ ໄດ້ເຮັດເປັນຕົວຢ່າງ ໃຫ້ເຫັນແລ້ວ !**



## ຊີວະປະຫວັດຫຍໍ້

## ດວງເດືອນ ບຸນຍາວົງ

**ດອກເກດ** ຫລື **ດວງເດືອນ ບຸນຍາວົງ** ເກີດທີ່ວຽງຈັນ ເມື່ອສົງຄາມໂລກຄັ້ງທີ 2 ຍຸຕິລົງໃຫມ່ໆ

ເປັນລູກຂອງ ມະຫາສີລາ ວີລະວົງ ( ນັກປາດ ລາວ ) ກັບນາງມາລີ

ສຳເລັດປະລິນຍາໂທ ສາຂາວິທະຍາສາດ ຟີຊິກ-ເຄມີ ຈາກມະຫາວິທະຍາໄລອາມັຽງ ປະເທດຝະລັ່ງ ( Amiens, Poitiers, France )

ອະດີດເປັນອາຈານສອນຢູ່ມະຫາວິທະຍາໄລສ້າງຄູ

ດົງໂດກ ວຽງຈັນ ( 1973 - 81 )

ຕໍ່ມາເປັນນັກແປປະຈໍາສໍານັກພິມ **ກ້າວໜ້າ ທີ່ມົດສະກູ** ອະດີດສະຫະພາບ ໂຊວຽດ ( 1981 - 85 )

ຮັບທຶນຄົ້ນຄວ້າ ຈາກມູນນິທິຟູນໄບຣ໌ ( Fulbright ) ໄປສອນພາສາ ແລະວັດທະນະທໍາລາວ ທີ່ມະຫາວິທະຍາໄລ ວໍຊິງຕັນ ( 1992 - 93 )

ຮັບທຶນສຶກສາ ຈາກມູນນິທິຍີ່ປຸ່ນ ໄປຄົ້ນຄວ້າ ວັນນະຄະດີ ປຽບທຽບຕໍານານນິທານທ້ອງຖິ່ນ ກ່ຽວກັບທ້າວຮຸ່ງທ້າວເຈືອງ ທີ່ມະຫາວິທະຍາໄລໂຊເຟຍ ນະຄອນໂຕກຽວ ( 1994 - 95 )

**ຜົນງານ :**

- ເລື່ອງຍາວ, ເລື່ອງສັ້ນ ແລະບົດກະວີ ພິມຮ່ວມກັບຜູ້ອື່ນໆ ແລະພິມອອກໃນວາລະສານຕ່າງໆ ນັບແຕ່ 1970 ມາ
- ນິທານປະກອບຮູບ 3 ເຫລັ້ມ
- ປະເພນີແລະຮີດຄອງໃນທ້າວຮຸ່ງທ້າວເຈືອງ
- ແຜພັບລາຍໃນສິນສາຍໄໝ

- ວັດຈະນານຸກົມປະກອບຮູບ

- ບົດຄົ້ນຄວ້າ : ອຸດົມຄະຕິ ແນວຄິດ ໃນມະຫາກາບທ້າວຮຸ່ງທ້າວເຈືອງ

ວຽກງານສຳຮອງ : ສະສົມ ແລະເກັບກຳຂໍ້ມູນກ່ຽວກັບ ຜ້າແພບູຮານຂອງລາວ ແລະວຽກງານພັດທະນາຊົນນະບົດ ແລະແມ່ຍິງ, ແລະເປັນທີ່ປຶກສາຂອງສະມາຄົມສົ່ງປື້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ.

UNICEF